ບໍລິສັດຫຼັກຊັບ ລາວ-ຈີນ ມະຫາຊົນ
Lao-China Securities Public Company

ບົດລາຍງານ ຜົນການດຳເນີນທຸລະກິດ ບລຈ ປະຈຳປີ 2025 ແລະ ແຜນການດຳເນີນທຸລະກິດ ບລຈ ປະຈຳປີ 2026

老-中证券 2025 年度工作报告暨 2026 年度经营计划

I. ປະຫວັດຄວາມເປັນມາຂອງບໍລິສັດ

公司背景

ບໍລິສັດຫຼັກຊັບ ລາວ-ຈີນ ມະຫາຊົນ (ເອີ້ນວ່າ: “ບລຈ” ຫຼື “ບໍລິສັດ”) ຊື່ເກົ່າແມ່ນ ບໍລິສັດຫຼັກຊັບ ລາວ-ຈີນ ຈຳກັດ ເປັນບໍລິສັດຫຼັກຊັບແຫ່ງທຳອິດພາຍໃຕ້ການຮ່ວມມືລະຫວ່າງ ສປປ ລາວ ແລະ ສປ ຈີນ ທີ່ສ້າງຕັ້ງຂຶ້ນໃນວັນທີ 27 ມິຖຸນາ 2013 ໃນຮູບແບບ ບໍລິສັດຈຳກັດ ມີຊື່ວ່າ ບໍລິສັດຫຼັກຊັບ ລາວ-ຈີນ ຈຳກັດ, ໃບທະບຽນວິສາຫະກິດເລກທີ 0631/ຈທວ ແລະ ໄດ້ຮັບການອະນຸຍາດສ້າງຕັ້ງບໍລິສັດຫຼັກຊັບຈາກ ຄະນະກຳມະການຄຸ້ມຄອງຫຼັກຊັບ (ເອີ້ນວ່າ: “ຄຄຊ”) ສະບັບເລກທີ: 010/ຄຄຊ, ລົງວັນທີ 16 ພະຈິກ 2013 ດ້ວຍທຶນຈົດທະບຽນ 100,000,000,000 ກີບ (ໜຶ່ງ ຮ້ອຍຕື້ກີບ), ຊຶ່ງມີຈຳນວນຮຸ້ນທັງໝົດ 10,000,000 ຮຸ້ນ (ສິບລ້ານຮຸ້ນ), ມູນຄ່າກຳນົດ 10,000 ກີບ/ຮຸ້ນ (ສິບພັນກີບ ຕໍ່ຮຸ້ນ), ມີທີ່ຕັ້ງສຳນັກງານ: ຊັ້ນ 6 ຕຶກຕະຫຼາດຫຼັກຊັບລາວ, ຖະໜົນ ກຳແພງເມືອງ, ບ້ານ ໂພນທັນເໜືອ, ເມືອງ ໄຊ ເສດຖາ, ນະຄອນຫຼວງວຽງຈັນ ແລະ ໄດ້ເຄື່ອນໄຫວດຳເນີນທຸລະກິດດ້ານຫຼັກຊັບເຕັມຮູບແບບ ປະເພດ ❶ທີ່ປຶກສາ ທາງດ້ານການເງິນ, ❷ນາຍໜ້າຊື້ ຂາຍ ຫຼັກຊັບ ແລະ ❸ຜູ້ຄ້ຳປະກັນການອອກຈຳໜ່າຍຫຼັກຊັບ.

老-中证券公众公司（以下简称“老-中证券”或“公司”） 前身为老-中证券有限公司是老挝和中国合作成立的首家证券公司，公司于 2013 年 6 月 27 日成立，企业注册号为 0631/企注字，公司于 2013 年 11 月 16 日获得老挝证券管理委员会颁发的第 010 号证券公司设立许可证，注册资本为 100，000，000，000 基普，共 10，000，000 股，每股面值 10，000 基普。公司原办公地址位于万象市赛色塔县蓬覃村老挝证券交易所大楼 6 楼。老-中证券有限公司从事包括财务咨询、证券经纪和承销在内的综合类证券业务。

ບໍລິສັດຫຼັກຊັບ ລາວ-ຈີນ ຈຳກັດ ປະກອບມີ 3 ຜູ້ຖືຮຸ້ນ ດັ່ງນີ້:

老-中证券有限公司拥有三个股东：

1) ທະນາຄານສົ່ງເສີມກະສິກຳ ຈຳກັດ (ເອີ້ນວ່າ: “ທສກ”) ຖືຮຸ້ນ 4,100,000 ຮຸ້ນ (ສີ່ລ້ານໜຶ່ງແສນຮຸ້ນ) ເທົ່າກັບ 41% (ສີ່ສິບເອັດສ່ວນຮ້ອຍ) ມີມູນຄ່າ 41,000,000,000 ກີບ (ສີ່ສິບເອັດຕື້ກີບ). ທສກ ໄດ້ຮັບການສ້າງຕັ້ງ ຂຶ້ນຕາມດຳລັດຂອງນາຍົກລັດຖະມົນຕີ ເລກທີ 92/ນຍ ລົງວັນທີ 19 ມິຖຸນາ 1993 ດ້ວຍທຶນຈົດທະບຽນ ເບື້ອງຕົ້ນ 1 ຕື້ກີບ, ມີຈຸດປະສົງເພື່ອສະໜອງສິນເຊື່ອເຂົ້າໃນການພັດທະນາຂະແໜງການກະສິກຳ-ປ່າໄມ້ ເປັນຕົ້ນຕໍ, ດຳເນີນທຸລະກິດໂດຍບໍ່ສະແຫວງຫາຜົນກຳໄລ ໂດຍການສະໜອງສິນເຊື່ອດ້ວຍອັດຕາດອກເບ້ຍຕ່ຳ ໃຫ້ຊາວກະສິກອນທັງເປັນລາຍກຸ່ມ ແລະ ລາຍບຸກຄົນ ດ້ວຍແຫຼ່ງທຶນຈາກລັດຖະບານ ແລະ ອົງການຕ່າງໆສະ ໜອງໃຫ້ ໂດຍໃນໄລຍະນັ້ນບໍ່ໄດ້ລະດົມເງິນຝາກ, ຊຶ່ງເຮັດໃຫ້ ທສກ ມີການດຳເນີນງານພາຍໃຕ້ລະບຽບຄຸ້ມ ຄອງທີ່ແຕກຕ່າງຈາກສະຖາບັນການເງິນອື່ນ. ເພື່ອປະຕິບັດຕາມ ທິດທາງການປັບປຸງ ຂອງ ລັດຖະບານ ວັນທີ 22 ມີນາ 2021 ທະນາຄານສົ່ງເສີມກະສິກຳ ໄດ້ເຊັນສັນຍາຮ່ວມທຶນ ກັບ ບໍລິສັດ ພິງຊັບທະວີ ກໍ່ສ້າງ-ຂົວທາງ ເຄຫາສະຖານ ແລະ ຊົນລະປະທານ ຈຳກັດຜູ້ດຽວ ຊຶ່ງຖືຮຸ້ນ 70% ແລະ ທສກ ຕາງໜ້າລັດຖະບານ ແມ່ນ ກະຊວງການເງິນ ຖືຮຸ້ນ 30%, ດຳເນີນທຸລະກິດ ພາຍໃຕ້ ການຄຸ້ມຄອງຂອງທະນາຄານແຫ່ງ ສປປ ລາວ ແລະ ລະບຽບກົດໝາຍຂອງ ສປປ ລາວ ວາງອອກໃນແຕ່ລະໄລຍະ, ພ້ອມທັງປະຕິບັດຕາມ ສິດຂອບເຂດ ພາລະ

ບົດບາດຂອງຕົນ ໃນການພັດທະນາເສດຖະກິດສັງຄົມຂອງຊາດ. ມາຮອດເດືອນ ກໍລະກົດ 2022 ທະນາຄານ ສົ່ງເສີມກະສິກຳ ກໍໄດ້ສຳເລັດການປັບປຸງຮູບແບບວິສາຫະກິດ ຈາກ ລັດວິສາຫະກິດ ມາເປັນ ບໍລິສັດຈຳກັດ ແລະ ປ່ຽນຊື່ເປັນ ທະນາຄານສົ່ງເສີມກະສິກຳ ຈຳກັດ. ມາຮອດປະຈຸບັນ ທສກ ປະກອບມີ 01 ສຳນັກງານໃຫຍ່, 17 ສາຂາ ແລະ 82 ໜ່ວຍບໍລິການທົ່ວປະເທດ, ຊຶ່ງຖືເປັນທະນາຄານທຸລະກິດລັດອັນດັບນຳໜ້າດ້ານການບໍລິການດ້ານກະສິກຳ ແລະ ພັດທະນາຊົນນະບົດ ເພື່ອຕອບສະໜອງການບໍລິການແກ່ລູກຄ້າເພີ່ມຂຶ້ນໃນແຕ່ລະປີ ໂດຍຂະຫຍາຍຕາໜ່າງການໃຫ້ບໍລິການໄປເຖິງລູກຄ້າໄດ້ທົ່ວປະເທດ ໂດຍສະເພາະບັນດາຕົວເມືອງຕ່າງໆທີ່ເປັນຈຸດສຸມຂອງລັດຖະບານໃນການພັດທະນາເສດຖະກິດ-ສັງຄົມ ເຮັດໃຫ້ລູກຄ້າ ກໍຄືປະຊາຊົນສາມາດເຂົ້າເຖິງການບໍລິການທີ່ຍົກລະດັບຂຶ້ນເປັນກ້າວໆຂອງ ທສກ.

老挝农业促进银行（简称“农行”）持有 4,100,000 股，占股 41%，价值 410 亿基普。该银行依据 1993 年 6 月 19 日总理签发的第 92 号《总理令》而成立，初始注册资本为 10 亿基普。其主要宗旨是为农林领域提供贷款支持。农行以非营利为目标，通过低利率向农民（无论是个人还是团体）提供贷款，资金来源则主要依赖于政府和各机构的支持。彼时，农行并不吸收公众存款，这使得其运营模式有别于其他金融机构，并遵循着独特的监管框架。为响应老挝政府的改革号召，农行于 2021 年 3 月 22 日与彭沙塔维路桥建筑独资有限公司签署了合资协议。依据协议内容，彭沙塔维持有 70%的股权，而代表老挝财政部的农行则持有剩余的 30%。农行在老挝中央银行的监管下，并遵循老挝法律框架，严格执行政府在不同时期颁布的法律法规，积极履行其在社会经济发展中的职责与使命。至 2022 年 7 月，农行顺利完成了公司重组，由国有企业成功转型为有限公司，并更名为老挝农业促进银行。目前，农行在全国范围内设立了 1 个总部、17 家分行及 82 个服务网点。作为老挝领先的国有商业银行，农行致力于提供农业和农村发展服务，以满足日益增长的客户需求。其服务网络已遍及全国，特别是政府在经济和社会发展方面重点关注的城镇，旨在让老挝人民能够逐步享受到农行日益完善的服务。

2) ບໍລິສັດຫຼັກຊັບ ປາຊິຟິກ ຮຸ້ນສ່ວນ ຈຳກັດ (ເອີ້ນວ່າ: “ປຊຟ”) ຖືຮຸ້ນ 3,900,000 ຮຸ້ນ (ສາມລ້ານເກົ້າແສນຮຸ້ນ) ເທົ່າກັບ 39% (ສາມສິບເກົ້າສ່ວນຮ້ອຍ) ມີມູນຄ່າ 39,000,000,000 ກີບ (ສາມສິບເກົ້າຕື້ກີບ). ໃນປີ 2007, ປຊຟ ໄດ້ເຂົ້າຈົດທະບຽນຢູ່ຕະຫຼາດຫຼັກຊັບ ຊຽງໄຮ້. ໃນຊຸມປີທີ່ຜ່ານມາ, ປຊຟ ໄດ້ເພີ່ມຄວາມເຂັ້ມແຂງ ຂອງການລົງທຶນຢ່າງຕໍ່ເນື່ອງ ຜ່ານການສະສົມທຸລະກິດ, ວິທີການ ເງິນ, ການເພີ່ມທະວີການລົງທຶນ ໄດ້ດຳເນີນການຈັດຕັ້ງສ່ວນຕົວ, ການແບ່ງປັນສ່ວນແບ່ງຢ່າງປະສົບຜົນສຳເລັດ ແລະ ທຶນທີ່ຈົດທະບຽນຂອງບໍລິສັດໄດ້ເພີ່ມຂຶ້ນເປັນ 6.8 ຕື້ຢວນ. ໃນທ້າຍເດືອນກັນຍາ 2024, ຊັບສິນທັງໝົດຂອງບໍລິສັດບັນລຸເຖິງ 17.1 ຕື້ຢວນ ແລະ ຊັບສິນສຸດທິບັນລຸເຖິງ 9.6 ຕື້ຢວນ. ໃນຖານະເປັນບໍລິສັດຈົດທະບຽນຢູ່ຕະຫຼາດຫຼັກຊັບ, ຫຼັງຈາກການພັດທະນາຢ່າງໝັ້ນຄົງເປັນເວລາຫຼາຍປີ, ປຊຟ ໄດ້ສ້າງລະບົບ ແລະ ທີມງານທຸລະກິດທີ່ສົມບູນ, ມີມາດຕະຖານ ແລະ ມີສະພາບຄ່ອງໃນຕະຫຼາດ, ລວມທັງເຄືອຂ່າຍບໍລິການກວມເອົາທຸກແຂວງ, ເມືອງ, ເຂດປົກຄອງຕົນເອງ ແລະ ເມືອງທີ່ຢູ່ສັງກັດລັດຖະບານໂດຍກົງ ຍົກເວັ້ນຮົ່ງກົ່ງ, ມາກາວ ແລະ ໄຕ້ຫວັນ ລວມທັງມີແບບແຜນການ

ສ້າງຜົນກຳໄລຂອງບໍລິສັດໄດ້ມີຄວາມຫຼາກຫຼາຍໆຂຶ້ນ ແລະ ໄດ້ເຕີບໂຕເປັນບໍລິສັດຫຼັກຊັບຂະໜາດກາງແຫ່ງຊາດ.

太平洋证券持有 3,900,000 股，占股 39%，价值 390 亿基普。太平洋证券股份有限公司于 2007 年在上海证券交易所上市。近年来，太平洋证券通过经营积累和多种融资、增资手段，不断增强资本实力，先后成功实施定向增发和配股，注册资本增至人民币 68 亿元。截至 2024 年 9 月底，公司总资产达 171 亿元，净资产达 96 亿元。太平洋证券作为一家上市券商，经过多年稳健发展，打造和建设了较为完整规范和有市场活力的业务体系和团队，包括涵盖除港澳台外全国所有省市自治区、直辖市的营业网点，盈利模式日趋多元，已经成长为全国性的中等规模综合券商。

3) ບໍລິສັດ ລາວ ອຸດສາຫະກຳຂໍ້ມູນຂ່າວສານ ຈຳກັດ (ເອີ້ນວ່າ: “ລອຂ”) ຖືຮຸ້ນ 2,000,000 ຮຸ້ນ (ສອງລ້ານຮຸ້ນ) ເທົ່າກັບ 20% (ຊາວສ່ວນຮ້ອຍ) ມີມູນຄ່າ 20,000,000,000 ກີບ (ຊາວຕື້ກີບ). ລອຂ ໄດ້ຮັບການສ້າງຕັ້ງຂຶ້ນໃນເດືອນ ຕຸລາ ປີ 2010 ເປັນໜຶ່ງໃນບໍລິສັດທີ່ມີທັກສະດ້ານການດຳເນີນທຸລະກິດສູງ ແລະ ມີການຮ່ວມມືທີ່ແໜ້ນແຟ້ນ ກັບບັນດາບໍລິສັດແຖວໜ້າຂອງ ສປປ ລາວ ທັງສາມາດໝູນໃຊ້ຂໍ້ໄດ້ປຽບຂອງຕົນໃຫ້ເປັນປະໂຫຍດໃນທຸລະກິດຮ່ວມກັບຫຼາກຫຼາຍບໍລິສັດ ເປັນຕົ້ນແມ່ນ ບໍລິສັດສະໜອງເຄື່ອງດື່ມ, ບໍລິສັດທ່ອງທ່ຽວ, ບໍລິສັດເຕັກນິກໄອທີ, ບໍລິສັດຈຳໜ່າຍລົດ, ທຸລະກິດໂຮງແຮມ ແລະ ອື່ນໆ, ຊຶ່ງສາມາດສ້າງຮູບແບບການບໍລິການນັບມື້ນັບຫຼາຍຂຶ້ນ ແລະ ສາມາດດຶງດູດການລົງທຶນຈາກຜູ້ລົງທຶນຕ່າງປະເທດ. ໃນອະນາຄົດ ລອຂ ຈະເປັນສູນລວມທາງດ້ານເຕັກນິກ IT ທີ່ສາມາດສະໜອງລະບົບກະດານລາຍງານລາຄາເຕັມຮູບແບບ, ລະບົບລາຍງານການເງິນຄົບວົງຈອນ, ລະບົບຊື້ ຂາຍຫຼັກຊັບຜ່ານອິນເຕີເນັດ ແລະ ລະບົບແກ້ໄຂບັນຫາດ້ານ IT.

老挝信息产业有限公司（以下简称“信息公司”）持有 2,000,000 股，占股 20%，价值 200 亿基普。信息公司成立于 2010 年 10 月，是一家业务技能出众的公司，与老挝众多领军企业建立了稳固的合作关系。凭借自身的独特优势，信息公司与多家企业开展了广泛的业务合作，这些企业涵盖了饮料、旅游、IT、汽车经销和酒店等多个行业。目前，信息公司正不断拓展其服务模式，并积极吸引外国投资。展望未来，信息公司立志成为一家 IT 技术中心，致力于提供全方位的市场数据系统、综合财务报告系统、在线证券交易系统以及 IT 解决方案系统。

ໃນປີ 2021, ອີງຕາມ ມະຕິກອງປະຊຸມຜູ້ຖືຮຸ້ນ ບລຈ ສະໄໝສາມັນ ປະຈຳປີ 2019 ສະບັບເລກທີ 002/ບລຈ, ລົງວັນທີ 27 ມັງກອນ 2021, ບລຈ ໄດ້ຂະຫຍາຍຂອບເຂດການດຳເນີນທຸລະກິດດ້ານຫຼັກຊັບເພີ່ມໂດຍການສ້າງຕັ້ງ ພະແນກບໍລິຫານກອງທຶນສ່ວນບຸກຄົນ ທີ່ສອດຄ່ອງກັບກົດໝາຍວ່າດ້ວຍຫຼັກຊັບ (ສະບັບປັບປຸງ) ສະບັບເລກທີ 79/ສພຊ, ລົງວັນທີ 03 ທັນວາ 2019 ເພື່ອໃຫ້ທັນກັບສະພາບການເຄື່ອນໄຫວຂອງຂອບເຂດການດຳເນີນທຸລະກິດດ້ານຫຼັກຊັບຂອງ ສປປ ລາວ.

2021 年，依据老-中证券于 2021 年 1 月 27 日通过的 2019 年度股东大会决议（第 002 号），公司为了适应 2019 年 12 月 3 日发布的修订版《证券法》（第 79 号）及老挝证券行业的最新发展态势，拓宽证券业务范围，特成立了私募基金管理部门。

ໃນປີ 2022, ບລຈ ໄດ້ຮັບການອະນຸຍາດດຳເນີນທຸລະກິດຈາກ ຄຄຊ ສະບັບເລກທີ 01/ຄຄຊ, ລົງວັນທີ 10 ມັງກອນ 2022 ໃນການເຄື່ອນໄຫວດຳເນີນທຸລະກິດຫຼັກຊັບ ປະເພດ ❶ທີ່ປຶກສາທາງດ້ານການ ເງິນ, ❷ທີ່ປຶກສາດ້ານການລົງທຶນ, ❸ນາຍໜ້າຊື້ ຂາຍ ຫຼັກຊັບ ຕາມການສັ່ງຊື້ ຫຼື ສັ່ງຂາຍຂອງຜູ້ລົງທຶນ, ❹ຄ້າຫຼັກຊັບໃນນາມບໍລິສັດຫຼັກຊັບ, ❺ຄ້ຳປະກັນການອອກຈຳໜ່າຍຫຼັກຊັບ ແລະ ❻ບໍລິຫານກອງທຶນສ່ວນບຸກຄົນ, ຊຶ່ງ ບລຈ ເປັນບໍລິສັດຫຼັກຊັບພຽງແຫ່ງ ດຽວໃນ ສປປ ລາວ ທີ່ໃຫ້ບໍລິການຄົບວົງຈອນໃນຂອບເຂດການດຳເນີນທຸລະກິດດ້ານຫຼັກຊັບ ທີ່ໄດ້ກຳນົດໄວ້ໃນ ມາດຕາ 58 (ປັບປຸງ) ຂອບເຂດການດຳເນີນທຸລະກິດຫຼັກຊັບຂອງບໍລິສັດຫຼັກຊັບ ອີງຕາມກົດໝາຍວ່າດ້ວຍຫຼັກຊັບ (ສະບັບປັບປຸງ) ສະບັບເລກທີ 79/ສພຊ, ລົງວັນທີ 03 ທັນວາ 2019.

2022 年，老-中证券凭借 2022 年 1 月 10 日证管委颁发的第 01 号《业务经营许可证》，正式获准运营以下证券业务：1）财务顾问服务、2）证券投资咨询服务、3）基于投资者交易指令的证券经纪服务、4）证券自营业务、5）证券发行与承销业务，以及 6）私募基金管理服务。老-中证券是老挝唯一一家能够依据 2019 年 12 月 3 日颁布的第 79 号《证券法》（修订版）第 58 条规定，全面提供各类证券业务服务的证券公司。

ໃນປີ 2024, ອີງຕາມ ມະຕິກອງປະຊຸມຜູ້ຖືຮຸ້ນ ບລຈ ສະໄໝວິສາມັນ ຄັ້ງທີ I ປະຈຳປີ 2024 ສະບັບເລກທີ 002/ບລຈ, ລົງວັນທີ 10 ພຶດສະພາ 2024, ບລຈ ໄດ້ຍົກຍ້າຍສຳນັກງານ ໄປຕັ້ງຢູ່ເຂດເສດຖະກິດພິເສດ ບຶງທາດຫຼວງ. ພາຍຫຼັງສຳເລັດການຍົກຍ້າຍສຳນັກງານ ບລຈ ໄດ້ຮັບໃບທະບຽນວິສາຫະກິດທີ່ອອກໃຫ້ໂດຍເຈົ້າໜ້າທີ່ທະບຽນວິສາຫະກິດ, ຄະນະຄຸ້ມຄອງເຂດເສດຖະກິດພິເສດ ນະຄອນຫຼວງວຽງຈັນ ສະບັບເລກທີ 0010/ຈທວ, ລົງວັນທີ 25 ມິຖຸນາ 2024 ຊຶ່ງມີທີ່ຕັ້ງສຳນັກງານ: ເຂດເສດຖະກິດພິເສດ ບຶງທາດ ຫຼວງ, ບ້ານ ໂພນທັນ, ເມືອງ ໄຊເສດຖາ, ນະຄອນຫຼວງ ວຽງຈັນ.

2024 年，根据老-中证券于 2024 年 5 月 10 日通过的第一次临时股东大会决议（编号 002），公司决定将办公地点迁往塔銮湖经济特区。搬迁工作顺利完成后，老-中证券于 2024 年 6 月 25 日获得了万象市经济特区管理委员会颁发的编号为 0010 的新营业执照，新办公地址位于老挝万象市赛色塔县蓬覃村的塔銮湖经济特区。

ບລຈ ໄດ້ຫັນປ່ຽນຮູບແບບ ບໍລິສັດຈຳກັດ ມາເປັນ ບໍລິສັດມະຫາຊົນ ພາຍໃຕ້ໃບທະບຽນວິສາຫະກິດເລກທີ 0010/ຈທວ, ລົງວັນທີ 25 ຕຸລາ 2024 ໂດຍທຶນຈົດທະບຽນ 100,000,000,000 ກີບ (ໜຶ່ງຮ້ອຍຕື້ກີບ), ຊຶ່ງມີຈຳນວນຮຸ້ນທັງໝົດ 1,000,000,000 ຮຸ້ນ (ໜຶ່ງຕື້ຮຸ້ນ), ມູນຄ່າກຳນົດ 100 ກີບ/ຮຸ້ນ (ໜຶ່ງຮ້ອຍກີບຕໍ່ຮຸ້ນ) ໂດຍມີ 3 ຜູ້ຖືຮຸ້ນ ຄື:

依据 2024 年 10 月 25 日颁发的第 0010 号营业执照，老-中证券已从有限公司成功转型为公众公司，其注册资本为 100,000,000,000 基普，共计 1,000,000,000 股，每股面值为 100 基普。目前，公司共有三位股东：

- ທະນາຄານສົ່ງເສີມກະສິກຳ ຈຳກັດ ຖືຮຸ້ນ 410,000,000 ຮຸ້ນ (ສີ່ຮ້ອຍສິບລ້ານຮຸ້ນ) ເທົ່າກັບ 41% (ສີ່ສິບເອັດສ່ວນຮ້ອຍ) ມີມູນຄ່າ 41,000,000,000 ກີບ (ສີ່ສິບເອັດຕື້ກີບ);

  老挝农业促进银行，持有 410,000,000 股（四亿一千万股），占股 41%（百分之四十一），价值 41,000,000,000 基普（四百一拾亿基普）；

- ບໍລິສັດຫຼັກຊັບ ປາຊິຟິກ ຮຸ້ນສ່ວນ ຈຳກັດ ຖືຮຸ້ນ 390,000,000 ຮຸ້ນ (ສາມຮ້ອຍເກົ້າສິບລ້ານຮຸ້ນ) ເທົ່າກັບ 39% (ສາມສິບເກົ້າສ່ວນຮ້ອຍ) ມີມູນຄ່າ 39,000,000,000 ກີບ (ສາມສິບເກົ້າຕື້ກີບ);

  太平洋证券股份有限公司，持有 390,000,000 股（三亿九千万股），占股 39%（百分之三十九），价值 39,000,000,000 基普（三百九十亿基普）；
- ບໍລິສັດ ລາວ ອຸດສາຫະກຳຂໍ້ມູນຂ່າວສານ ຈຳກັດ ຖືຮຸ້ນ 200,000,000 ຮຸ້ນ (ສອງຮ້ອຍລ້ານຮຸ້ນ) ເທົ່າກັບ 20% (ຊາວສ່ວນຮ້ອຍ) ມີມູນຄ່າ 20,000,000,000 ກີບ (ຊາວຕື້ກີບ).

  老挝信息产业有限公司，持有 200,000,000 股（二亿股），占股 20%（百分之二十），价值 20,000,000,000 基普（二百亿基普）。

ນັບແຕ່ດຳເນີນທຸລະກິດ ຈົນເຖິງປະຈຸບັນ ບລຈ ໄດ້ມີການຂະຫຍາຍຂອບເຂດການດຳເນີນທຸລະກິດດ້ານຫຼັກຊັບຈາກ 3 ປະເພດ ມາເປັນ 6 ປະເພດ ທີ່ໃຫ້ບໍລິການທຸລະກິດດ້ານຫຼັກຊັບຄົບວົງຈອນພຽງແຫ່ງດຽວໃນ ສປປ ລາວ ແລະ ມີສຳນັກງານຕັ້ງຢູ່: ເຂດເສດຖະກິດພິເສດ ບຶງທາດຫຼວງ, ບ້ານ ໂພນທັນ, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ ມີທ່າແຮງທີ່ຕັ້ງຂອງສຳນັກງານ ເພື່ອດຶງດູດບໍລິສັດ ແລະ ຜູ້ລົງທຶນທັງພາຍໃນ ແລະ ຕ່າງປະເທດ.

自成立以来，老-中证券已将其证券业务范围从最初的 3 种扩展至如今的 6 种，成功跻身为老挝国内唯一一家提供全方位、全资质证券业务服务的公司。公司坐落于万象市赛色塔县的蓬覃村，地处塔銮湖经济特区这一战略要地，其地理位置优越，旨在吸引并汇聚国内外众多公司及投资者。

ບລຈ ສຳເລັດການອອກຈຳໜ່າຍຮຸ້ນຄັ້ງທຳອິດໃຫ້ແກ່ມວນຊົນ ແລະ ເຂົ້າຈົດທະບຽນຢ່າງເປັນທາງການ ທີ່ຕະຫຼາດຫຼັກຊັບລາວ ນະວັນທີ 25 ເມສາ 2025, ຮຸ້ນທີ່ອອກຈຳໜ່າຍຈຳນວນ 111,111,200 ຮຸ້ນ (ໜຶ່ງຮ້ອຍສິບເອັດລ້ານໜຶ່ງແສນສິບເອັດພັນສອງຮ້ອຍຮຸ້ນ), ໂດຍທຶນທີ່ລະດົມໄດ້ຈຳນວນ 14,444,456,000 ກີບ (ສິບສີ່ຕື້ສີ່ຮ້ອຍສີ່ສິບສີ່ລ້ານສີ່ແສນຫ້າສິບຫົກພັນກີບ), ປະຈຸບັນ ຈຳນວນຮຸ້ນລວມຂອງ ບລຈ ແມ່ນ 1,111,111,200 ຮຸ້ນ (ໜຶ່ງຕື້ໜຶ່ງຮ້ອຍສິບເອັດລ້ານໜຶ່ງແສນສິບເອັດພັນສອງຮ້ອຍຮຸ້ນ) ແລະ ມີທຶນຈົດທະບຽນທັງໝົດ 111,111,120,000 ກີບ (ໜຶ່ງຮ້ອຍສິບເອັດຕື້ໜຶ່ງຮ້ອຍສິບເອັດລ້ານໜຶ່ງແສນຊາວພັນກີບ), ປະກອບດ້ວຍຜູ້ຖືຮຸ້ນສ້າງຕັ້ງ 3 ຂາຮຸ້ນ ແລະ ຜູ້ລົງທຶນທົ່ວໄປ, ດັ່ງລາຍລະອຽດລຸ່ມນີ້:

老-中证券成功完成首次向公众发行股票，并于 2025 年 4 月 25 日正式在老交所挂牌上市。共计发行 111,111,200 股（一亿一千一百十一万一千两百股），募集资金总额为 14,444,456,000 基普，目前，公司总股为 1,111,111,200 股，注册资本总额为 111,111,120,000 基普，其由 3 位创始股东及公众投资者共同组成，股东架构如下：

- ທະນາຄານສົ່ງເສີມກະສິກຳ ຈຳກັດ ຖືຮຸ້ນ 410,000,000 ຮຸ້ນ (ສີ່ຮ້ອຍສິບລ້ານຮຸ້ນ) ເທົ່າກັບ 36.90% (ສາມສິບເອັດສ່ວນຮ້ອຍ) ມີມູນຄ່າ 41,000,000,000 ກີບ (ສີ່ສິບເອັດຕື້ກີບ);

  老挝农业促进银行，持有 410,000,000 股（四亿一千万股），占股 36.90%（百分之三十六点九），价值 41,000,000,000 基普（四百一拾亿基普）；

- ບໍລິສັດຫຼັກຊັບ ປາຊິຟິກ ຮຸ້ນສ່ວນ ຈຳກັດ ຖືຮຸ້ນ 390,000,000 ຮຸ້ນ (ສາມຮ້ອຍເກົ້າສິບລ້ານຮຸ້ນ) ເທົ່າກັບ 35.10% (ສາມສິບເກົ້າສ່ວນຮ້ອຍ) ມີມູນຄ່າ 39,000,000,000 ກີບ (ສາມສິບເກົ້າຕື້ກີບ);

  太平洋证券股份有限公司，持有 390,000,000 股（三亿九千万股），占股 35.10%（百分之三十五点一），价值 39,000,000,000 基普（三百九十亿基普）；
- ບໍລິສັດ ລາວ ອຸດສາຫະກຳຂໍ້ມູນຂ່າວສານ ຈຳກັດ ຖືຮຸ້ນ 200,000,000 ຮຸ້ນ (ສອງຮ້ອຍລ້ານຮຸ້ນ) ເທົ່າກັບ 18% (ສິບແປດສ່ວນຮ້ອຍ) ມີມູນຄ່າ 20,000,000,000 ກີບ (ຊາວຕື້ກີບ).

  老挝信息产业有限公司，持有 200,000,000 股（二亿股），占股 18%（百分之十八），价值 20,000,000,000 基普（二百亿基普）。
- ຜູ້ລົງທຶນທົ່ວໄປ ຖືຮຸ້ນ 111,111,200 ຮຸ້ນ (ໜຶ່ງຮ້ອຍສິບເອັດລ້ານໜຶ່ງແສນສິບເອັດພັນສອງຮ້ອຍຮຸ້ນ) ເທົ່າກັບ 10% (ສິບສ່ວນຮ້ອຍ) ມີມູນຄ່າ 11,111,120,000 ກີບ (ສິບເອັດຕື້ໜຶ່ງຮ້ອຍສິບເອັດລ້ານໜຶ່ງແສນຊາວພັນກີບ).

  公众投资者，持有 111,111,200 股（一亿一千一百十一万一千两百股），占有 10%（百分之十），价值 11,111,120,000 基普（一百十一亿一千一百十二万基普）。

II. ທຸລະກິດທີ່ດຳເນີນໃນປະຈຸບັນ

当前业务

1. ວັດທະນະທຳ ແລະ ນະໂຍບາຍດຳເນີນທຸລະກິດ

企业文化和经营方针

ດຳເນີນທຸລະກິດບົນພື້ນຖານ **“ຮ່ວມກັນສ້າງຜົນປະໂຫຍດຮ່ວມກັນ”** ຊຶ່ງໃນປະໂຫຍກຈະມີຄວາມໝາຍ ຄື: **“ຮ່ວມກັນສ້າງ”** ແມ່ນຮ່ວມກັນສ້າງຮູບແບບໂຄງສ້າງໃໝ່ຂອງອົງກອນທີ່ສົມບູນແບບທີ່ສຸດ ແລະ **“ຜົນປະໂຫຍດຮ່ວມກັນ”** ແມ່ນການດຳເນີນທຸລະກິດດ້ວຍການສະແຫວງຫາຜົນປະໂຫຍດຮ່ວມກັນຢ່າງບໍ່ຢຸດຢັ້ງ. ຊຶ່ງມີລາຍລະອຽດດັ່ງນີ້:

本公司以“**合作共赢**”为经营理念。“**合作**”指共同构建最完善的全新组织架构；“**共赢**”指坚持不懈地追求共同利益。具体如下：

ຕໍ່ລູກຄ້າ : ໃຫ້ບໍລິການດ້ວຍຄວາມຈິງໃຈ, ນຳສະເໜີຜະລິດຕະພັນທີ່ມີຄຸນນະພາບໃຫ້ແກ່ລູກຄ້າ ເພື່ອເພີ່ມຄວາມເຊື່ອໝັ້ນໃຫ້ແກ່ລູກຄ້າ

ຕໍ່ພະນັກງານ : ຍົກລະດັບຄຸນນະພາບຂອງວິຊາການຂຶ້ນເລື້ອຍໆ ໃຫ້ມີຄວາມຮູ້ຄວາມສາມາດ ແລະ ເປັນມືອາຊີບ

ຕໍ່ຜູ້ຖືຮຸ້ນ : ສ້າງຜົນກຳໄລສູງສຸດໃຫ້ແກ່ຜູ້ຖືຮຸ້ນ

ຕໍ່ສັງຄົມ : ສົ່ງເສີມພັດທະນາເສດຖະກິດ-ສັງຄົມໃຫ້ນັບມື້ນັບຂະຫຍາຍຕົວ ແລະ ພັດທະນາຕະຫຼາດທຶນຂອງ ສປປ ລາວ ແລະ ຕະຫຼາດທຶນຂອງ ສປ ຈີນ ໃຫ້ມີການແລກປ່ຽນຖອດຖອນບົດຮຽນຊຶ່ງກັນ ແລະ ກັນ

对客户 : 真诚地为客户提供服务，提供优质产品，增强客户的信任。

对员工　：　提升员工专业技术水平，确保其掌握必备的知识与技能，培养证券行业的专业工作人员。

对股东　：　最大化为股东创造利润。

对社会　：　促进社会经济持续发展，推动老挝和中国的资本市场发展，促进双方相互交流学习。

2. ລັກສະນະການບໍລິການ

服务特色

ບລຈ ດຳເນີນທຸລະກິດຫຼັກຊັບເຕັມຮູບແບບ ໂດຍແບ່ງອອກເປັນ 5 ປະເພດການໃຫ້ບໍລິການ ປະກອບມີ ❶ ນາຍໜ້າຊື້ ຂາຍຫຼັກຊັບ, ❷ ທີ່ປຶກສາດ້ານການເງິນ, ❸ ຜູ້ຄ້ຳປະກັນການອອກຈຳໜ່າຍຫຼັກ ຊັບ, ❹ ທີ່ປຶກສາດ້ານການລົງທຶນ ກ່ຽວກັບຫຼັກຊັບ ແລະ ❺ ການບໍລິຫານກອງທຶນສ່ວນບຸກຄົນ ຊຶ່ງມີລາຍລະອຽດລຸ່ມນີ້:

老-中证券为国内外个人、法人和机构投资者提供证券经纪服务。服务范围包括开设证券账户（股票、债券）、接收和传递交易指令、提供交易步骤指导、使用交易系统、执行交易以及提供老挝证券交易所的证券信息。此外，老-中证券还在万象市和各省份进行证券推广活动，面向政府部门和私营部门，例如公司、商业银行、国有企业和其他组织，以提高他们对证券业务的认识和理解。

2.1 ນາຍໜ້າຊື້ ຂາຍຫຼັກຊັບ

证券经纪

ບລຈ ໃຫ້ບໍລິການເປັນນາຍໜ້າຊື້ ຂາຍຫຼັກຊັບໃຫ້ແກ່ຜູ້ລົງທຶນ ປະເພດບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຈາກພາຍໃນ ແລະ ຕ່າງປະເທດ, ຊຶ່ງຂອບເຂດການໃຫ້ບໍລິການ ປະກອບດ້ວຍການເປີດບັນຊີຫຼັກຊັບ (ຮຸ້ນ, ຮຸ້ນກູ້ ແລະ ພັນທະບັດ), ການຮັບ-ສົ່ງ ຄຳສັ່ງຊື້ຂາຍຫຼັກຊັບ, ການໃຫ້ຄຳແນະນຳກ່ຽວກັບຂັ້ນຕອນການຊື້ ຂາຍ, ການນຳໃຊ້ລະບົບຊື້ ຂາຍ, ການເຮັດທຸລະກຳຊື້ ຂາຍ ແລະ ສະໜອງຂໍ້ມູນກ່ຽວກັບຫຼັກຊັບໃນ ຕລຊລ. ພ້ອມດຽວກັນນັ້ນ, ບລຈ ຍັງມີການໂຄສະນາເຜີຍແຜ່ວຽກງານດ້ານຫຼັກຊັບນອກສະຖານທີ່ ພາຍໃນນະຄອນຫຼວງວຽງຈັນ ແລະ ຢູ່ຕ່າງແຂວງໃຫ້ແກ່ພາກລັດ ແລະ ເອກະຊົນ ເປັນຕົ້ນແມ່ນບັນດາບໍລິສັດ, ທະນາຄານທຸລະກິດ, ລັດວິສາຫະກິດ ແລະ ພາກສ່ວນອື່ນໆ ເພື່ອໃຫ້ຄວາມຮູ້ຄວາມເຂົ້າໃຈໃນວຽກງານຫຼັກຊັບຫຼາຍຂຶ້ນ.

老-中证券为国内外个人、法人和机构投资者提供证券经纪服务。服务范围包括开设证券账户（股票、债券）、接收和传递交易指令、提供交易步骤指导、使用交易系统、执行交易以及提供老挝证券交易所的证券信息。此外，老-中证券还在万象市和各省份进行证券推广活动，面向政府部门和私营部门，例如公司、商业银行、国有企业和其他组织，以提高他们对证券业务的认识和理解。

2.2 ທີ່ປຶກສາດ້ານການເງິນ

财务顾问

ບລຈ ເປັນບໍລິສັດຫຼັກຊັບແຫ່ງໜຶ່ງ ທີ່ມີຊື່ສຽງທາງດ້ານທີ່ປຶກສາດ້ານການເງິນ ໂດຍມີນັກວິຊາຊີບທຸລະກິດຫຼັກຊັບ ປະເພດທີ່ປຶກສາດ້ານການເງິນ ທີ່ມີຄວາມເປັນມືອາຊີບ ແລະ ມີປະສົບການຫຼາຍກວ່າ 10 ປີໃນຂົງເຂດວຽກງານຫຼັກຊັບ, ຊຶ່ງໄລຍະທີ່ຜ່ານມາໄດ້ສຳເລັດການເປັນທີ່ປຶກສາດ້ານການເງິນໃຫ້ກັບບັນດາວິສາຫະກິດ ແລະ ລັດວິສາຫະກິດ ເປັນຕົ້ນແມ່ນ ທະນາຄານການຄ້າຕ່າງປະເທດ ມະຫາຊົນ, ກຸ່ມບໍລິສັດ ທ່ອງທ່ຽວອັດທະນະທາລາວ ມະຫາຊົນ, ບໍລິສັດ ວຽງຈັນເຊັນເຕີ ລາວ ມະຫາຊົນ, ລັດວິສາຫະກິດ ໄປສະນີລາວ, ລັດວິສາຫະກິດ ການບິນລາວ ແລະ ບໍລິສັດ ລາວ ໂທລະຄົມມະນາຄົມ ມະຫາຊົນ. ການໃຫ້ບໍລິການທີ່ປຶກສາດ້ານການເງິນຂອງ ບລຈ ແມ່ນການຊ່ວຍໃຫ້ຄຳແນະນຳ ແລະ ການຊ່ວຍເຫຼືອລູກຄ້າ ໂດຍຜ່ານການນຳໃຊ້ເຄື່ອງມືທາງການເງິນທີ່ຫຼາກຫຼາຍ ເພື່ອໃຫ້ສາມາດບັນລຸເປົ້າໝາຍດ້ານການເງິນ, ຊຶ່ງໃຫ້ບໍລິການທີ່ປຶກສາດ้านการเงิน ในวงการต่างๆ เช่น:

老-中证券是证券业内一家享有盛誉的财务顾问公司，汇聚了一批专业且经验丰富的证券业务财务顾问专家，他们在证券领域深耕细作超过十年之久。过往岁月里，公司已成功助力众多企业及国有企业实现财务愿景，其中包括老挝外贸大众银行、老挝文旅集团公众公司、老挝万象中心公众公司、老挝国家邮政公司、老挝航空公司以及老挝电信公众公司等知名企业。老-中证券的财务顾问服务，凭借多样化的金融工具，精准为客户提供策略建议与实战帮助，旨在助力客户达成其财务目标。公司所提供的财务顾问服务包括：

- ການອອກຈຳໜ່າຍຮຸ້ນສາມັນເພີ່ມທຶນໃຫ້ແກ່ມວນຊົນຄັ້ງທຳອິດ ແລະ ກະກຽມເຂົ້າຈົດທະບຽນໃນຕະຫຼາດຫຼັກຊັບ;
- ການອອກຈຳໜ່າຍຮຸ້ນສາມັນເພີ່ມທຶນໃຫ້ແກ່ຜູ້ຖືຮຸ້ນເດີມ (RO: Right offering);
- ການອອກຈຳໜ່າຍຮຸ້ນສາມັນເພີ່ມທຶນ ແລະ ຮຸ້ນກູ້ໃຫ້ແກ່ມວນຊົນ (PO: Public offering);
- ການອອກຈຳໜ່າຍຮຸ້ນສາມັນເພີ່ມທຶນ ແລະ ຮຸ້ນກູ້ໃນວົງຈຳກັດ (PP: Private placement);
- ການອອກຈຳໜ່າຍພັນທະບັດລັດຖະບານ;
- ການເປັນທີ່ປຶກສາດ້ານການເງິນກ່ຽວກັບການປະເມີນມູນຄ່າຮຸ້ນ (ກິດຈະການ);
- ການປັບປຸງໂຄງສ້າງທຸລະກິດ ແລະ ການປັບໂຄງສ້າງໜີ້;
- ການຊື້ ແລະ ຄອບລອມກິດຈະການ (Merger & Acquisition);
- ການເປັນທີ່ປຶກສາດ້ານການເງິນອິດສະຫຼະ.

- 首次公开发行股票并上市；
- 向原股东增资发行股票（RO：配股）；
- 向公众增资发行股票（PO：公开发行）；
- 向特定投资者发行股票（PP：私募）；
- 发行政府债券；
- 担任股票评估（活动）的财务顾问；
- 改善业务结构和债务重组；
- 并购；
- 独立财务顾问。

2.3 ການຄ້ຳປະກັນການອອກຈຳໜ່າຍຮຸ້ນ

发行承销

ບລຈ ຈະເຮັດສັນຍາຄ້ຳປະກັນການຈຳໜ່າຍຫຼັກຊັບ ກັບບໍລິສັດອອກຈຳໜ່າຍຫຼັກຊັບ ໂດຍສັງລວມຂໍ້ມູນພື້ນຖານຂອງບໍລິສັດທີ່ຈະອອກຈຳໜ່າຍຫຼັກຊັບ ເພື່ອນຳຂໍ້ມູນດັ່ງກ່າວມາວິເຄາະ ແລະ ສຶກສາຄວາມເປັນໄປໄດ້ໃນການລົງທຶນ, ສ້າງແຜນການອອກຈຳໜ່າຍຫຼັກຊັບ ເຊັ່ນ: ນະໂຍບາຍການຈຳໜ່າຍ, ການກຳນົດລາ ຄາ, ການກຳນົດສັດສ່ວນຜູ້ລົງທຶນ, ສ້າງແຜນສິ່ງເສີມການຕະຫຼາດ, ທີ່ປຶກສາດ້ານການເງິນຈະສ້າງແຜນການເປີດເຜີຍຂໍ້ມູນຂອງບໍລິສັດ ເພື່ອປະກອບເຂົ້າໃນໜັງສືຊວນຊື້ ແລະ ວຽກງານອື່ນໆທີ່ກ່ຽວຂ້ອງ ພ້ອມທັງນຳສະເໜີແຜນການອອກຈຳໜ່າຍຫຼັກຊັບໃຫ້ແກ່ພາກສ່ວນທີ່ກ່ຽວຂ້ອງ, ກະກຽມເອກະສານຂໍອະນຸມັດການຄ້ຳປະກັນການອອກຈຳໜ່າຍຫຼັກຊັບຈາກອົງການຄຸ້ມຄອງຢ່າງຄົບຖ້ວນສົມບູນ ແລະ ຈັດຕັ້ງປະຕິບັດຕາມແຜນການອອກຈຳໜ່າຍຫຼັກຊັບຕາມກຳນົດເວລາ. ການຄ້ຳປະກັນການອອກຈຳໜ່າຍຫຼັກຊັບຂອງ ບລຈ ມີ 2 ຮູບແບບ ຄື: ຮູບແບບຈຳໜ່າຍຮຸ້ນທັງໝົດ ຖ້າຫາກຈຳໜ່າຍໄດ້ບໍ່ໝົດ ຕ້ອງໄດ້ຮັບຊື້ຮຸ້ນທັງໝົດທີ່ເຫຼືອ (Firm Commitment) ແລະ ຮູບແບບຈຳໜ່າຍໃຫ້ໄດ້ຫຼາຍທີ່ສຸດ ແຕ່ຈະບໍ່ມີພັນທະຮັບຊື້ຮຸ້ນທີ່ເຫຼືອ (Best Efforts).

老-中证券将与证券发行公司签订承销协议，收集拟发行股票公司的基本信息，用于分析和研究投资可行性，制定证券发行计划，例如：销售政策、定价、确定投资者比例、制定营销计划。财务顾问将制定公司信息披露计划，并将其纳入招股说明书和其他相关工作中，并将发行计划提交给相关方，准备向监管机构申请证券发行的全套申请材料，并按时执行证券发行计划。老-中证券在股票发行承销中，主要有两种模式：1）尽力承销（Best Efforts）：承销商尽最大努力销售股票，但对未售出的股票不承担购买义务。2）包销（Firm Commitment）：承销商承诺全部包销股票，如果未能全部售出，承销商必须自行购买剩余股票。在这种模式下，公司面临着股票价格下跌的风险，可能导致公司亏损，并影响公司资金的流动性。

2.4 ທີ່ປຶກສາດ້ານການລົງທຶນ

投资顾问

ບລຈ ໃຫ້ບໍລິການທີ່ປຶກສາດ້ານການລົງທຶນ ແລະ ຊ່ວຍໃຫ້ຄຳແນະນຳກ່ຽວກັບຜະລິດຕະພັນກ່ຽວກັບຫຼັກຊັບ ເປັນຕົ້ນແມ່ນ ການວາງແຜນ ແລະ ພັດທະນາກົນລະຍຸດການລົງທຶນ, ຈັດການພອດການລົງທຶນໃຫ້ສອດຄ່ອງກັບເປົ້າໝາຍທາງການເງິນຂອງບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດ ທີ່ມີຄວາມສົນໃຈລົງທຶນ ພາຍໃຕ້ຄວາມສ່ຽງທີ່ຜູ້ລົງທຶນກອງທຶນສ່ວນບຸກຄົນຍອມຮັບໄດ້ ແລະ ບົນພື້ນຖານການສະໜອງຂໍ້ມູນຢ່າງຈະແຈ້ງກ່ຽວກັບນະໂຍບາຍການລົງທຶນ, ຄວາມສ່ຽງ, ຜົນຕອບແທນ, ຄ່າທຳນຽມທີ່ກ່ຽວຂ້ອງ ແລະ ຄ່າໃຊ້ຈ່າຍອື່ນໆ ເພື່ອເປັນຂໍ້ມູນໃຫ້ກັບຜູ້ລົງທຶນ ກ່ອນການຕັດສິນໃຈລົງທຶນ ໃຫ້ຄົບຖ້ວນ ແລະ ຖືກຕ້ອງ ພ້ອມທັງກວດກາ, ດັດປັບຢ່າງຕໍ່ເນື່ອງສະໝ່ຳສະເໝີ ແລະ ສາມາດປ່ຽນແປງໄປຕາມຄວາມຕ້ອງການ ເພື່ອໃຫ້ສ້າງຜົນຕອບແທນ ແລະ ກະຈາຍຄວາມຄວາມສ່ຽງຕາມທີ່ຜູ້ລົງທຶນຕ້ອງການ. ໃນໄລຍະທີ່ຜ່ານມາ, ບລຈ ໄດ້ເປັນທີ່ປຶກສາດ້ານການລົງທຶນ ໃຫ້ກັບບັນດາບັນດາລັດວິສາຫະກິດ, ວິສາຫະກິດຂະໜາດໃຫຍ່ ແລະ ຂະໜາດກາງ ໃນ ສປປ ລາວ ຈຳນວນຫຼາຍ.

老-中证券提供投资顾问服务，并针对证券相关产品给出专业建议。这包括为客户规划和制定投资策略，管理投资组合，旨在满足个人、法人实体以及国内外潜在投资者的财务目标。同时，在投资者可接受的风险范围内运作，并提供关于投资政策、风险、回报及相关费用的清晰信息，确保投资者在做出投资决策前能够获取全面而准确的信息。此外，老-中证券还会持续、定期地对投资组合进行审查、调整与优化，以契合投资者的需求，实现收益并分散风险。过往，老-中证券已成功为老挝众多国有企业及大、中型企业提供了专业的投资顾问服务。

2.5 ການບໍລິຫານກອງທຶນສ່ວນບຸກຄົນ

私募基金管理

ອີງຕາມທິດທາງແຜນຍຸດທະສາດການພັດທະນາຕະຫຼາດທຶນລາວ ເພື່ອສ້າງຄວາມຫຼາກຫຼາຍຜະລິດຕະພັນຫຼັກຊັບ, ບລຈ ຈຶ່ງໄດ້ຂະຫຍາຍຂອບເຂດການດຳເນີນທຸລະກິດການບໍລິຫານກອງທຶນສ່ວນບຸກຄົນ ທີ່ສ້າງຕັ້ງຂຶ້ນຈາກການລະດົມທຶນຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຈາກພາຍໃນ ແລະ ຕ່າງປະເທດ ດ້ວຍກັນ ບໍ່ເກີນຈຳນວນ 35 ລາຍ ຕາມການກຳນົດຂອງ ຄຄຊ ແລະ ໄດ້ມອບໝາຍໃຫ້ ບລຈ ບໍລິຫານຈັດການການລົງທຶນ ພາຍໃຕ້ຄວາມສ່ຽງທີ່ຜູ້ລົງທຶນກອງທຶນສ່ວນບຸກຄົນຍອມຮັບໄດ້ ເພື່ອຕອບສະໜອງຄວາມຕ້ອງການ ແລະ ສະແຫວງຫາຜົນປະໂຫຍດສູງສຸດຂອງຜູ້ລົງທຶນກອງທຶນສ່ວນບຸກຄົນ ຕາມເງື່ອນໄຂຂອງສັນຍາກອງທຶນ. ໃນປະຈຸບັນ, ບລຈ ໄດ້ມີການເຊັນສັນຍາດູແລຊັບສິນກອງທຶນສ່ວນບຸກຄົນກັບທະນາຄານ ແຫ່ງປະເທດຈີນ (ຮົງກົງ) ສາຂານະຄອນຫຼວງວຽງຈັນ ຊຶ່ງເປັນທະນາຄານດູແລຊັບສິນ ທີ່ຖືກຮັບຮອງໂດຍ ສຄຄຊ, ເພື່ອເກັບຮັກສາ ແລະ ຄຸ້ມຄອງຊັບສິນຂອງກອງທຶນສ່ວນບຸກຄົນ.

遵循老挝资本市场的发展战略导向，为推进证券产品的多元化，老-中证券已拓展其私募基金管理业务的范畴。此业务的资金来源广泛，涵盖了个人、法人实体以及国内外机构，但总数严格控制在老挝证券管理委员会设定的35个以内。老-中证券被赋予在私募基金投资者可承受的风险框架内管理投资的职责，旨在满足并力求实现私募基金投资者的最大利益，同时严格遵守基金合同的各项条款。当前，老-中证券已与获得证管委批准的托管银行——中国银行（香港）万象分行，签署了私募基金托管协议，共同负责私募基金资产的保管与管理工作。

- ສຳລັບເປົ້າໝາຍການລົງທຶນຂອງຜະລິດຕະພັນກອງທຶນສ່ວນບຸກຄົນ ສາມາດລົງທຶນໃສ່ເປົ້າໝາຍໃດໜຶ່ງ ຫຼື ທັງໝົດ ດັ່ງນີ້:

1) ຜະລິດຕະພັນໃນຕະຫຼາດເງິນ ເປັນຕົ້ນແມ່ນ ເງິນຝາກປະຢັດ, ເງິນຝາກປະຈຳ ແລະ ໃບຢັ້ງຢືນເງິນຝາກ;
2) ຮຸ້ນຈົດທະບຽນໃນຕະຫຼາດຫຼັກຊັບ;
3) ຮຸ້ນກູ້;
4) ພັນທະບັດລັດຖະບານ;
5) ການພັດທະນາໂຄງລ່າງພື້ນຖານທີ່ມີຜົນຕອບແທນທາງດ້ານການເງິນ;
6) ເປົ້າໝາຍອື່ນ ຕາມການກຳນົດ ແລະ ໄດ້ຮັບອະນຸຍາດຈາກ ສຄຄຊ.

- 私募基金产品的投资标的可以涵盖以下一个或多个标的类型：

1) 货币市场工具，包括但不限于储蓄存款、定期存款以及各类存款凭证；

2) 在证券交易所公开上市交易的股票；

3) 企业发行的公司债券；

4) 政府发行的各类债券；

5) 能够产生经济回报的基础设施建设项目；

6) 以及经证管委办公厅规定并批准的其他投资标的。

3. ໂຄງສ້າງຜູ້ຖືຮຸ້ນ


ລຳດັບ	ຜູ້ຖືຮຸ້ນ	ຈຳນວນຮຸ້ນ	ສັດສ່ວນ
1	ທະນາຄານສົ່ງເສີມກະສິກຳ ຈຳກັດ	410,000,000	36.90%
2	ບໍລິສັດຫຼັກຊັບ ປາຊີຟິກ ຮຸ້ນສ່ວນ ຈຳກັດ	390,000,000	35.10%
3	ບໍລິສັດ ລາວ ອຸດສາຫະກຳຂໍ້ມູນຂ່າວສານ ຈຳກັດ	200,000,000	18.00%
4	ຜູ້ລົງທຶນທົ່ວໄປ	111,111,200	10.00%
ລວມ		**1,111,111,200**	**100.00%**


股东结构

序号	股东	股数	持股比例
1	老挝农业促进银行	410,000,000	36.90%
2	太平洋证券股份有限公司	390,000,000	35.10%
3	老挝信息产业有限公司	200,000,000	18.00%
4	公众投资者	111,111,200	10.00%
合计		**1,111,111,200**	**100.00%**

4. ໂຄງຮ່າງການຈັດຕັ້ງຂອງບໍລິສັດ

公司组织架构





5. ອົງປະກອບຂອງສະພາບໍລິຫານ

ລຳດັບ	ຊື່ ແລະ ນາມສະກຸນ	ຕຳແໜ່ງ
1	ທ່ານ ໝູໄຊ ພູມສຸວັນ	ປະທານສະພາບໍລິຫານ
2	ທ່ານ ລີ ຊ່າງເຫວີຍ	ຮອງປະທານສະພາບໍລິຫານ
3	ທ່ານ ໂຈວ ຄຸ່ນ	ສະມາຊິກສະພາບໍລິຫານ
4	ທ່ານ ຈາງ ຮົງບິນ	ສະມາຊິກສະພາບໍລິຫານ
5	ທ່ານ ສົມພິງ ບໍລິບຸດ	ສະມາຊິກສະພາບໍລິຫານ
6	ທ່ານ ລິນ ລີ	ສະມາຊິກສະພາບໍລິຫານ
7	ທ່ານ ຮສ. ປອ. ປິຍະ ວົງພິດ	ສະມາຊິກສະພາບໍລິຫານ / ສະມາຊິກອິດສະລະ
8	ທ່ານ ຫວ່າງ ເວີຍ	ສະມາຊິກສະພາບໍລິຫານ / ສະມາຊິກອິດສະລະ
9	ທ່ານ ນະ ຈັນຕະລີວົງ	ສະມາຊິກສະພາບໍລິຫານ / ສະມາຊິກອິດສະລະ

董事会成员

序号	姓名	职位
1	努赛·普苏万	董事长
2	李长伟	副董事长
3	周昆	董事
4	张洪斌	董事
5	颂蓬·波里布	董事
6	李林	董事
7	比亚·翁匹副教授、博士	董事/独立董事
8	王崴	董事/独立董事
9	纳·占达里翁	董事/独立董事

6. ອົງປະກອບຂອງຄະນະກຳມະການກວດສອບ

ລຳດັບ	ຊື່ ແລະ ນາມສະກຸນ	ຕຳແໜ່ງ
1	ທ່ານ ຫວ່າງ ເວີຍ	ຫົວໜ້າຄະນະ
2	ທ່ານ ໂຈວ ຄຸ່ນ	ຄະນະ
3	ທ່ານ ຮສ. ປອ. ປິຍະ ວົງພິດ	ຄະນະ

审计委员会成员

序号	审计委员会	职位
1	独立董事：王崴	主席
2	董事：周昆	委员
3	独立董事：比亚·翁匹	委员

7. ອົງປະກອບຂອງຄະນະກຳມະການຄຸ້ມຄອງຄວາມສ່ຽງ

ລຳດັບ	ຊື່ ແລະ ນາມສະກຸນ	ຕຳແໜ່ງ
1	ທ່ານ ສົມພິງ ບໍລິບຸດ	ຫົວໜ້າຄະນະ
2	ທ່ານ ລິນ ລີ	ຄະນະ
3	ທ່ານ ຮສ. ປອ. ປິຍະ ວົງພິດ	ຄະນະ

风险控制委员会成员

序号	风险控制委员会	职位
1	董事：颂蓬·波里布	主席
2	执行董事：李林	委员
3	独立董事：比亚·翁匹	委员

8. ອົງປະກອບຂອງຄະນະກຳມະການກຳນົດຄ່າຕອບແທນ

ລຳດັບ	ຊື່ ແລະ ນາມສະກຸນ	ຕຳແໜ່ງ
1	ທ່ານ ນະ ຈັນຕະລີວົງ	ຫົວໜ້າຄະນະ
2	ທ່ານ ໂຈວ ຄຸ່ນ	ຄະນະ
3	ທ່ານ ຫວ່າງ ເວີຍ	ຄະນະ

薪酬委员会成员

序号	薪酬委员会	职位
1	独立董事：纳·占达里翁	主席
2	董事：周昆	委员
3	独立董事：王崴	委员

9. ອົງປະກອບຂອງຄະນະກຳມະການຄັດເລືອກ

ລຳດັບ	ຊື່ ແລະ ນາມສະກຸນ	ຕຳແໜ່ງ
1	ທ່ານ ຈາງ ຮົງບິນ	ຫົວໜ້າຄະນະ
2	ທ່ານ ລິນ ລີ	ຄະນະ
3	ທ່ານ ຮສ. ປອ. ປິຍະ ວົງພິດ	ຄະນະ

提名委员会成员

序号	提名委员会	职位
1	董事：张洪斌	主席
2	执行董事：李林	委员
3	独立董事：比亚·翁匹	委员

10. ອົງປະກອບຂອງຄະນະອຳນວຍການ

ລຳດັບ	ຊື່ ແລະ ນາມສະກຸນ	ຕຳແໜ່ງ
1	ທ່ານ ລິນ ລີ	ຜູ້ອຳນວຍການ
2	ທ່ານ ປອ ສຸດທິເດດ ບຸນລືໄຊ	ຮອງຜູ້ອຳນວຍການ
3	ທ່ານ ພົງສະຫວັດ ລືນາມ	ຮອງຜູ້ອຳນວຍການ

管理层成员

序号	姓名	职位
1	李林	总经理
2	苏提德·本勒赛	副总经理
3	彭思晚·勒南	副总经理

11. ບຸກຄະລາກອນ

部门职员

ບໍລິສັດມີພະນັກງານທັງໝົດ 22 ຄົນ ແລະ ເປັນຍິງ 10 ທ່ານ. ປະກອບມີ 8 ພະແນກ ດັ່ງນີ້:

1) ພະແນກຫ້ອງການບໍລິຫານ-ຈັດຕັ້ງ;
2) ພະແນກບັນຊີ-ການເງິນ;
3) ພະແນກກວດກາພາຍໃນ;
4) ພະແນກການຕະຫຼາດ ຂາຍ ຫຼັກຊັບ;

5) ພະແນກທີ່ປຶກສາດ້ານການເງິນ ແລະ ຄໍ້າປະກັນການອອກຈໍາໜ່າຍຫຼັກຊັບ;

6) ພະແນກຄ້າຫຼັກຊັບ;

7) ພະແນກບໍລິຫານກອງທຶນສ່ວນບຸກຄົນ;

8) ພະແນກເຕັກນິກຂໍ້ມູນຂ່າວສານ.

公司共有 22 名员工，其中 10 名为女性。公司设有以下 8 个部门：

1. 办公室及人力资源部
2. 财务部
3. 财务顾问及证券承销部
4. 经纪业务部
5. 证券自营部
6. 私募基金管理部
7. 信息技术部
8. 内部监察部

12. ຊີວະປະຫວັດຫຍໍ້



ທ່ານ ໝູໄຊ ພຸມສຸວັນ

ຊີວະປະຫວັດຫຍໍ້:

ວັນ ເດືອນ ປີເກີດ: 08 ມັງກອນ 1977

ສັນຊາດ: ລາວ

ຕຳແໜ່ງ: ປະທານສະພາບໍລິຫານ

ປະຫວັດການສຶກສາ:

ປີ 1996-2000: ປະລິນຍາຕີ ສາຂາເສດຖະສາດ, ມະຫາວິທະຍາໄລທຳມະສາດ ລາດຊະອານາຈັກໄທ

ປີ 2007-2008: ປະລິນຍາໂທ ສາຂາເສດຖະສາດ, ມະຫາວິທະຍາໄລ Adelaide

ປະຫວັດການເຮັດວຽກ:

ປີ 2003-2004: ວິຊາການ, ກົມຈັດຕັ້ງ ແລະ ພະນັກງານ, ທຫລ

ປີ 2005-2006: ວິຊາການ, ກົມຄຸ້ມຄອງ ທະນາຄານທຸລະກິດ ແລະ ສະຖາບັນການເງິນ, ທຫລ

ປີ 01/2009: ວິຊາການ, ກົມນະໂຍບາຍເງິນຕາ, ທຫລ

ປີ 06/2009: ຮອງຫົວໜ້າພະແນກ, ກົມນະໂຍບາຍເງິນຕາ, ທຫລ

ປີ 05/2010: ຮັກສາການຫົວໜ້າພະແນກ, ກົມບໍລິການທະນາຄານ, ທຫລ

ປີ 02/2013: ຫົວໜ້າພະແນກ, ກົມບໍລິການທະນາຄານ, ທຫລ

ປີ 02/2017: ຮອງຫົວໜ້າກົມ, ກົມບໍລິການທະນາຄານ, ທຫລ

ປີ 02/2022: ຮອງຫົວໜ້າກົມ, ກົມນະໂຍບາຍເງິນຕາ, ທຫລ

ປີ 09/2022: ຮອງຫົວໜ້າກົມ, ກົມບໍລິການທະນາຄານ, ທຫລ

ປີ 03/2023-ປະຈຸບັນ: ຮອງອຳນວຍການ, ຊີ້ນຳ ພະແນກຄຸ້ມຄອງ ບໍລິຫານແຫຼ່ງທຶນ, ພະແນກຄຸ້ມຄອງສາຂາ ແລະ ພະແນກບໍລິຫານຄວາມສ່ຽງ, ທສກ



努赛·普苏万

个人信息：

出生日期（日/月/年）：1977 年 1 月 8 日

国籍:老挝

职务：董事长

教育背景：

1996-2000 年：泰国法政大学 经济学学士

2007-2008 年：阿德莱德大学 经济学硕士

工作经历：

2003-2004 年：老挝央行行政和人力资源司职员

2005-2006 年：老挝央行商业银行和金融机构管理司职员

2009 年 1 月-5 月：老挝央行货币政策司职员

2009 年 6 月-2010 年 5 月：老挝央行货币政策司副处长

2010 年 5 月-2013 年 2 月：老挝央行货币政策司代理处长

2013 年 2 月-2017 年 2 月：老挝央行货币政策司处长

2017 年 2 月-2022 年 2 月：老挝央行银行服务司副司长

2022 年 2 月-2022 年 9 月：老挝央行货币政策司副司长

2022 年 9 月-2023 年 3 月：老挝央行银行服务司副司长

2023 年 3 月至今：农业促进银行副行长，分管资金管理处、分行管理处和风险管理处



ທ່ານ ລີ ຊ່າງເຫວີຍ

ຊີວະປະຫວັດຫຍໍ້:

ວັນ ເດືອນ ປີເກີດ: 03 ທັນວາ 1964

ສັນຊາດ: ຈີນ

ຕຳແໜ່ງ: ຮອງປະທານສະພາບໍລິຫານ

ປະຫວັດການສຶກສາ:

ປີ 1981-1985: ປະລິນຍາຕີ ສາຂາເສດຖະກິດການເມືອງ, ມະຫາວິທະຍາໄລປັກກິ່ງ ນະຄອນປັກກິ່ງ

ປີ 1987-1990: ປະລິນຍາໂທ ສາຂາເສດຖະສາດ, ມະຫາວິທະຍາໄລ ປັກກິ່ງ ນະຄອນປັກກິ່ງ

ປີ 2004-2006: ສາຂາການບໍລິຫານ (EMBA), China Europe International Business School (CEIBS)

ປະຫວັດການເຮັດວຽກ:

ປີ 1985-1987: ພະນັກງານ, ວຽກງານຄົ້ນຄວ້າ, ສູນຄົ້ນຄວ້າເສດຖະກິດ ແຂວງ ເຫີນານ

ປີ 1990-1993: ອາຈານ, ວຽກງານການສຶກສາ, ໂຮງຮຽນພັກສຸນກາງພັກ ຄອມມູນິດຈີນ

ປີ 1993-1998: ຜູ້ອຳນວຍການ, ວຽກງານດຳເນີນທຸລະກິດ, ບໍລິສັດຫຼັກຊັບ ເສີນຢິນວ່ານກົວ ຮຸ້ນສ່ວນ ຈຳກັດ ພະແນກທຸລະກິດຫາຍໂຄວ

ປີ 1998-1999: ຮອງຜູ້ອຳນວຍການ ແລະ ຜູ້ອຳນວຍການພະແນກທຸລະ ກິດ, ວຽກງານການຄຸ້ມຄອງ ແລະ ການດຳເນີນທຸລະກິດ, ບໍລິສັດຫຼັກຊັບ ເສີນຢິນວ່ານກົວ ຮຸ້ນສ່ວນ ຈຳກັດ ສຳນັກງານໃຫຍ່ປັກກິ່ງ

ປີ 1999-2012: ຮອງຜູ້ອຳນວຍການຫົວໜ້າຕິດຕາມກວດກາ, ວຽກງານ ການຄຸ້ມຄອງ, ບໍລິສັດ ບໍລິຫານກອງທຶນ ຟູກົວ ຈຳກັດ

ປີ 2019-2020: ຄະນະກຳມະການກວດກາ, ວຽກງານການຄຸ້ມຄອງ, China Securities Inter-Agency Quotation System Co., Ltd

ປີ 2012-ປະຈຸບັນ: ຜູ້ອຳນວຍການ, ວຽກງານການຄຸ້ມຄອງ, ບໍລິສັດຫຼັກ ຊັບ ປາຊິຟິກ ຮຸ້ນສ່ວນ ຈຳກັດ



李长伟

个人信息：

出生日期（日/月/年）：1964 年 12 月 3 日

国籍：中国

职务：副董事长

教育背景：

1981-1985 年：北京大学，政治经济学，学士

1987-1990 年：北京大学，经济学，硕士

2004-2006 年，中欧国际工商学院，工商管理（EBMA）专业

工作经历：

1985-1987 年：河南省经济研究中心，干部，研究工作

1990-1993 年：中共中央党校，教师，教育工作

1993-1998 年：申银万国证券股份有限公司海口营业部，总经理，运营工作

1998-1999 年：申银万国证券股份有限公司北京总部，副总经理兼营业部总经理，管理及运营工作

1999-2012 年：富国基金管理有限公司，副总经理督察长，管理工作

2019-2020:年 中证机构间报价系统股份有限公司，监事，管理工作

2012 年至今：太平洋证券股份有限公司，总经理，管理工作



ທ່ານ ໂຈວ ຄຸ່ນ

ຊີວະປະຫວັດຫຍໍ້:

ວັນ ເດືອນ ປີເກີດ: 03 ສິງຫາ 1971

ສັນຊາດ: ຈີນ

ຕຳແໜ່ງ: ສະມາຊິກສະພາບໍລິຫານ

ປະຫວັດການສຶກສາ:

ປີ 1989-1993: ປະລິນຍາຕີ ສາຂາການຄຸ້ມຄອງເສດຖະກິດກະສິກຳ, ມະຫາວິທະຍາໄລກະສິກຳຢຸນນານ ນະຄອນຄຸນໝິງ ແຂວງຢຸນນານ

ປະຫວັດການເຮັດວຽກ:

ປີ 2006-ປະຈຸບັນ: ປະທານສະພາບໍລິຫານ, ກຸ່ມບໍລິສັດ ອຸດສາຫະກຳ ຢຸນນານ ຫາຍເສີ່ງ ຮຸ້ນສ່ວນ ຈຳກັດ

ປີ 2012-ປະຈຸບັນ: ປະທານສະພາບໍລິຫານ, ກຸ່ມບໍລິສັດ ພັດທະນາເຂດ ເສດຖະກິດສະເພາະບໍ່ເຕ່ນ ລາວ ຈຳກັດ



周昆

个人信息：

出生年月日：1971 年 8 月 3 日

国籍：中国

职务：董事

教育背景：

1989-1993 年：云南农业大学农业经济管理，学士

工作经历：

2006 年至今：云南海城实业集团股份有限公司，董事长

2012 年至今：老挝磨丁经济专区开发集团有限公司，董事长



ທ່ານ ຈ່າງ ຫົງບິ່ນ

ຊີວະປະຫວັດຫຍໍ້:

ວັນ ເດືອນ ປີເກີດ: 11 ກໍລະກົດ 1966

ສັນຊາດ: ຈີນ

ຕຳແໜ່ງ: ສະມາຊິກສະພາບໍລິຫານ

ປະຫວັດການສຶກສາ:

ປີ 1982-1986: ປະລິນຍາຕີ ສາຂາການເງິນ, ມະຫາວິທະຍາໄລບໍລິຫານ ທຸລະກິດ ໂຊນຮາຍຕ້ຽນ ນະຄອນຫຼວງປັກກິ່ງ

ປີ 2001-2003: ປະລິນຍາໂທ ສາຂາການເງິນທະນາຄານ, ມະຫາວິທະຍາໄລປັກກິ່ງ ໂຊນຮາຍຕ້ຽນ ນະຄອນຫຼວງປັກກິ່ງ

ປະຫວັດການເຮັດວຽກ:

ປີ 1986-1995: ຮອງຫົວໜ້າພະແນກ, ຄຸ້ມຄອງບໍລິຫານ, ບໍລິສັດ ເທັກໂນໂລຊີ ນຳເຂົ້າ-ສົ່ງອອກ ແຫ່ງປະເທດຈີນ ຈຳກັດ

ປີ 1995-1999: CFO, ຄຸ້ມຄອງບໍລິຫານ, TEMAX GMBH (ປະເທດເຢຍລະມັນ)

ປີ 1999-2001: ຫົວໜ້າພະແນກ, ຄຸ້ມຄອງບໍລິຫານ, ກຸ່ມບໍລິສັດ ທົ່ງຢັ້ງ ເທັກໂນໂລຊີ ປະເທດຈີນ

ປີ 2001-2003: ຮອງຫົວໜ້າຝ່າຍບັນຊີ, ຄຸ້ມຄອງບໍລິຫານ, ບໍລິສັດ ວິສາ ອະກຳເຄມີ ແລະ ການກໍ່ສ້າງ ແຫ່ງປະເທດຈີນ ຈຳກັດ

ປີ 2003-2008: ຮອງຜູ້ອຳນວຍການ, ຄຸ້ມຄອງບໍລິຫານ, ບໍລິສັດຫຼັກຊັບ ນິວອີຣາ ຈຳກັດ

ປີ 2008-ປະຈຸບັນ: ຮອງຜູ້ອຳນວຍການ, ຄຸ້ມຄອງບໍລິຫານ, ບໍລິສັດຫຼັກຊັບ ປາຊີຟິກຮຸ້ນສ່ວນ ຈຳກັດ



张洪斌

个人信息：

出生日期（日/月/年）：1966 年 7 月 11 日

国籍：中国

职务：董事

教育背景：

1982-1986 年：北京商学院，财务学，学士

2001-2003 年：北京大学，金融学，硕士

工作经历：

1986-1995 年：中国技术进出口总公司，副处长

1995-1999 年：TEMAX GMBH（德国），财务总监

1999-2001 年：中国通用技术集团，处长

2001-2003 年：中国化工建设总公司，副总会计师

2003-2008 年：新时代证券有限责任公司，常务副总经理

2008 年至今：太平洋证券股份有限公司，副总经理



ທ່ານ ສົມພິງ ບໍລິບຸດ

ຊີວະປະຫວັດຫຍໍ້:

ວັນ ເດືອນ ປີເກີດ: 10 ກັນຍາ 1990

ສັນຊາດ: ລາວ

ຕຳແໜ່ງ: ສະມາຊິກສະພາບໍລິຫານ

ປະຫວັດການສຶກສາ:

ປີ 2007-2010: ຊັ້ນສູງ ສາຂາວິຊາການເງິນ-ການທະນາຄານ, ວິທະຍາໄລ ເສດຖະສາດບໍລິຫານທຸລະກິດ

ປີ 2008-2013: ປະລິນຍາຕີ ສາຂາວິຊາບໍລິຫານທຸລະກິດ ແລະ ສາຂາວິຊາຄູພາສາອັງກິດ, ມະຫາວິທະຍາໄລແຫ່ງຊາດລາວ

ປີ 2016-2018: ປະລິນຍາໂທ ສາຂາວິຊາການບັນຊີ, ມະຫາວິທະຍາໄລແຫ່ງຊາດລາວ

ປະຫວັດການເຮັດວຽກ:

ປີ 2012-2013: ວິຊາການ, ຄັງເງິນສິດ, ທະນາຄານ ເອັສທີ ຈຳກັດ

ປີ 2013-2015: ວິຊາການ, ວຽກງານບໍລິຫານທຶນ, ທະນາຄານ ເອັສທີ ຈຳກັດ

ປີ 2015-2018: ຫົວໜ້າໜ່ວຍງານ, ວຽກງານບໍລິຫານທຶນ, ທະນາຄານ ເອັສທີ ຈຳກັດ

ປີ 2018-2020: ຮອງຫົວໜ້າຂະແໜງ, ວຽກງານບໍລິຫານທຶນ, ທະນາຄານ ເອັສທີ ຈຳກັດ

ປີ 2020-2022: ຫົວໜ້າຂະແໜງ, ວຽກງານບໍລິຫານທຶນ, ທະນາຄານ ເອັສທີ ຈຳກັດ

ປີ 2022-2023: ຮອງຜູ້ຈັດການຝ່າຍ, ວຽກງານບໍລິຫານທຶນ, ທະນາຄານ ເອັສທີ ຈຳກັດ

ປີ 2023-ປະຈຸບັນ: ຫົວໜ້າພະແນກ, ວຽກງານຄຸ້ມຄອງບໍລິຫານທຶນ, ທສກ



宋蓬·波拉布

个人信息：

出生日期（日/月/年）：1990 年 9 月 10 日

国籍：老挝

职务：董事

教育背景：

2007-2010 年：索塔经济与工商管理学院金融与银行系，硕士

2008-2013 年：老挝国立大学工商管理专业、英语教师专业，学士

2016-2018 年：老挝国立大学会计专业

工作经历：

2012-2013 年：ST 银行金库技术员

2013-2015 年：ST 银行投资管理业务部技术员

2015-2018 年：ST 银行投资管理业务部组长

2018-2020 年：ST 银行投资管理业务部副主任

2020-2022 年：ST 银行投资管理业务部主任

2022-2023 年：ST 银行投资管理业务部副经理

2023 年至今：农业促进银行投资管理业务部主任



ທ່ານ ລິນ ລີ

ຊີວະປະຫວັດຫຍໍ້:

ວັນ ເດືອນ ປີເກີດ: 02 ທັນວາ 1976

ສັນຊາດ: ຈີນ

ຕຳແໜ່ງ: ສະມາຊິກສະພາບໍລິຫານ

ປະຫວັດການສຶກສາ:

ປີ 1995-1999: ປະລິນຍາຕີ ສາຂາວິຊາສິນລະປະວັນນະຄະດີ ພາສາ ລາວ, ມະຫາວິທະຍາໄລ ພາສາຕ່າງປະເທດ ເມືອງໂລຢາງ ແຂວງ ເຫີນານ

ປະຫວັດການເຮັດວຽກ:

ປີ 1999-2005: ຜູ້ແປພາສາຊັ້ນກາງ, ແປພາສາ, ຄະນະກຳມະການແປ ພາສາ ແຂວງຢຸນນານ

ປີ 2005-2012: ວິຊາການ, ກົດຈະການບ້ານໃກ້ຄຽງ, ຫ້ອງການພົວພັນ ຕ່າງປະເທດ ແຂວງຢຸນນານ

ປີ 2009-2011: ເລຂາຊັ້ນສາມ, ການຄ້າ ແລະ ງານຕະຫຼາດນັດ, ສຳນັກ ງານທີ່ປຶກສາເສດຖະກິດ-ການຄ້າ ສະຖານທູດ ສປ ຈີນ ປະຈຳ ສປປ ລາວ

ປີ 2012-ປະຈຸບັນ: ພະນັກງານ, ພະແນກພັດທະນາຍຸດທະສາດ/ພະແນກ ຮ່ວມມືສາກົນ ບໍລິສັດຫຼັກຊັບ ປາຊີຟິກຮຸ້ນສ່ວນ ຈຳກັດ

ປີ 2013-ປະຈຸບັນ: ຜູ້ອຳນວຍການ, ບໍລິສັດຫຼັກຊັບ ລາວ-ຈີນ ມະຫາຊົນ



李林

个人信息：

出生日期（日/月/年）：1976 年 12 月 2 日

国籍：中国

职位：董事

教育背景：

年 1995-1999：解放军洛阳外国语大学，老挝语语言文学专业，学士

工作经历：

1999-2005 年：云南省翻译协会　翻译

2005-2012 年：云南省外办 邻国处 主任科员

2009-2011 年：中国驻老挝大使馆经商处 三秘

2012 年至今：太平洋证券股份有限公司 国际业务部

2013 年至今：老-中证券 总经理



ທ່ານ ຣສ ປອ. ປິຍະ ວົງພິດ

ຊີວະປະຫວັດຫຍໍ້:

ວັນ ເດືອນ ປີເກີດ: 23 ຕຸລາ 1979

ສັນຊາດ: ລາວ

ຕຳແໜ່ງ: ສະມາຊິກສະພາບໍລິຫານ

ປະຫວັດການສຶກສາ:

ປີ 1998-2002: ປະລິນຍາຕີ ສາຂາວິຊາບໍລິຫານທຸລະກິດ ສາຂາການເງິນ, ມະຫາວິທະຍາໄລຫໍການຄ້າໄທ ບາງກອກ ປະເທດໄທ

ປີ 2004-2006: ປະລິນຍາໂທ ສາຂາວິຊາເສດຖະສາດ, ມະຫາວິທະຍາໄລໂກເບ ປະເທດຍີ່ປຸ່ນ

ປີ 2011-2014: ປະລິນຍາເອກ ສາຂາວິຊາເສດຖະສາດ, ມະຫາວິທະຍາໄລໂກເບ ປະເທດຍີ່ປຸ່ນ

ປະຫວັດການເຮັດວຽກ:

ປີ 2009-ປະຈຸບັນ: ຫົວໜ້າວິຊາການເງິນ ແລະ ທະນາຄານ, ສິດສອນ, ວຽກງານບໍລິຫານ ແລະ ວິຊາການພາຍໃນພາກ, ຄະນະເສດຖະສາດ ແລະ ບໍລິຫານທຸລະກິດ ມະຫາວິທະຍາໄລແຫ່ງຊາດ



比亚•翁匹

个人信息：

出生日期（日/月/年）：1979 年 10 月 23 日

国籍：老挝

职务：董事

教育背景：

1998-2002 年：泰国经贸大学工商管理金融系学士

2004-2006 年：日本神户大学经济学硕士

2011-2014 年：日本神户大学经济学博士

工作经历：

2009 年至今：国立大学，经济学和工商管理学院金融和银行系主任



ທ່ານ ຫວາງ ເວີຍ

ຊີວະປະຫວັດຫຍໍ້:

ວັນ ເດືອນ ປີເກີດ: 25 ຕຸລາ 1972

ສັນຊາດ: ຈີນ

ຕຳແໜ່ງ: ສະມາຊິກສະພາບໍລິຫານ

ປະຫວັດການສຶກສາ:

ປີ 1992-1994: ຊັ້ນສູງ ສາຂາວິຊາຄະນະເອກະສານ, ມະຫາວິທະຍາໄລແຂວງຢຸນນານ

ປະຫວັດການເຮັດວຽກ:

ປີ 1994-2014: ຫົວໜ້າພະແນກ, ວຽກງານຄະນະກຳມະການພັກ, ບໍລິສັດສາກົນຢຸນນານ

ປີ 2014-ປະຈຸບັນ: ຫົວໜ້າພະແນກ, ວຽກງານຂອງຂະແໜງການຕົວແທນ ສປປ ລາວ, ບໍລິສັດຫຼັກຊັບ ປາຊີຟິກຮຸ້ນສ່ວນ ຈຳກັດ



王崴

个人信息：

出生日期（日/月/年）：1972 年 10 月 25 日

国籍：中国

职务：董事

教育背景：

1992-1994：云南大学档案学（行政信息方向），大专

工作经历：

1994-2014 年：云南国际公司部门经理

2014 年至今：太平洋证券股份有限公司老挝代表处部门总经理



ທ່ານ ນະ ຈັນຕະລີວົງ

ຊີວະປະຫວັດຫຍໍ້:

ວັນ ເດືອນ ປີເກີດ: 09 ມິຖຸນາ 1957

ສັນຊາດ: ລາວ

ຕຳແໜ່ງ: ສະມາຊິກສະພາບໍລິຫານ

ປະຫວັດການສຶກສາ:

ປີ 1980-1985: ຊັ້ນສູງ ສາຂາການບັນຊີ, ສະຖາບັນທະນາຄານ ເມືອງ ດົງດາ ຮ່າໂນ້ຍ, ສສ ຫວຽດນາມ

ປີ 2003-2007: ປະລິນຍາໂທ ສາຂາບໍລິຫານທຸລະກິດ, ມະຫາວິທະຍາໄລແຫ່ງຊາດ ຮ່າໂນ້ຍ, ສສ ຫວຽດນາມ

ປະຫວັດການເຮັດວຽກ:

ປີ 1991-1995: ຜູ້ອຳນວຍການ, ບໍລິຫານທະນາຄານ, ທະນາຄານອາລຸນໃໝ່ ສາຂາຊຽງຂວາງ

ປີ 1996-1997: ຮອງກົມ, ກົມຄຸ້ມຄອງທະນາຄານ, ທຫລ

ປີ 1998-1999: ຮອງກົມ, ກົມກວດກາພາຍໃນ, ທຫລ

ປີ 2000-2002: ຫົວໜ້າກົມ, ກົມບໍລິການທະນາຄານ, ທຫລ

ປີ 2003-2005: ຜູ້ອຳນວຍການ, ບໍລິຫານທະນາຄານ, ທະນາຄານພັດທະນາລາວ

ປີ 2006-2010: ຫົວໜ້າກົມ, ບັນຊີ-ການເງິນ, ທຫລ

ປີ 2010-2016: ຫົວໜ້າສາຂາ, ບໍລິຫານສາຂາ, ທຫລ ສາຂາພາກໃຕ້

ປີ 2017-2018: ຜູ້ຊ່ວຍຜູ້ວ່າ, ວຽກບັນຊີ-ການເງິນ, ທຫລ

ປີ 2019-ປະຈຸບັນ: ທີ່ປຶກສາ, ການເງິນ-ທະນາຄານ, ກຸ່ມບໍລິສັດພິງຊັບທະວີ



纳·占达里翁

个人信息：

出生日期（日/月/年）：1957 年 9 月 6 日

国籍：老挝

职务：董事

教育背景：

1980-1985 年：（越南）银行学院会计学，大专

2003-2007:（越南）国家经济大学商业管理学，学士

工作经历：

1991-1995 年：新曙光银行川圹省分行行长

1996-1997 年：老挝央行银行管理部副司长

1998-1999 年：老挝央行银行内部监察部副司长

2000-2002 年：老挝央行银行银行服务部司长

2003-2005 年：老挝开发银行行长

2006-2010 年：老挝央行会计-财务司司长

2010-2016 年：老挝央行南部分行行长

2017-2018 年：老挝央行行长助理，分管会计-财务工作

2019 年至今：蓬沙塔维集团公司金融银行顾问



ທ່ານ ປອ. ສຸດທິເດດ ບຸນລືໄຊ

ຊີວະປະຫວັດຫຍໍ້:

ວັນ ເດືອນ ປີເກີດ: 07 ກໍລະກົດ 1978

ສັນຊາດ: ລາວ

ຕຳແໜ່ງ: ຮອງຜູ້ອຳນວຍການ

ປະຫວັດການສຶກສາ:

ປີ 1998-2002: ປະລິນຍາຕີ ສາຂາວິຊາການເງິນສາກົນ, ມະຫາວິທະຍາໄລຈີຫຼິນ, ນະຄອນຊາງຊຸນ, ແຂວງຈີຫຼິນ, ສປ ຈີນ

ປີ 2002-2005: ປະລິນຍາໂທ ສາຂາວິຊາການເງິນ, ມະຫາວິທະຍາໄລຈີຫຼິນ, ນະຄອນຊາງຊຸນ, ແຂວງຈີຫຼິນ, ສປ ຈີນ

ປີ 2005-2009: ປະລິນຍາເອກ ສາຂາເສດຖະສາດໂລກ, ມະຫາວິທະຍາໄລຈີຫຼິນ, ນະຄອນຊາງຊຸນ, ແຂວງຈີຫຼິນ, ສປ ຈີນ

ປະຫວັດການເຮັດວຽກ:

ປີ 2009-2010: ພະນັກງານຝຶກງານ, ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ, ທຫລ

ປີ 2010-2013: ວິຊາການ, ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ, ທຫລ

ປີ 2014-2018: ຮອງຫົວໜ້າພະແນກ (ຊີ້ນຳລວມວຽກງານຮອບດ້ານຂອງພະແນກ), ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ, ທຫລ

ປີ 2018-2019: ວ່າການຫົວໜ້າພະແນກ, ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ, ທຫລ

ປີ 2019-2020: ຫົວໜ້າພະແນກ, ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ, ທຫລ

ປີ 2020-ປະຈຸບັນ: ຮອງຜູ້ອຳນວຍການ, ຊີ້ນຳພະແນກນາຍໜ້າຊື້ ຂາຍ ຫຼັກຊັບ, ພະແນກຄ້າຫຼັກຊັບ, ພະແນກບໍລິຫານ-ຈັດຕັ້ງ ແລະ ພະແນກກວດກາ, ບໍລິສັດຫຼັກຊັບ ລາວ-ຈີນ ມະຫາຊົນ



苏提德·布鲁赛 博士

个人信息：

出生日期（日/月/年）：1978 年 7 月 7 日

国籍：老挝

职位：副总经理

教育背景：

1998-2002 年，吉林大学经济学院，国际金融专业，学士。

2002-2005 年，吉林大学经济学院，金融学专业，硕士。

2005-2009 年，吉林大学经济学院，世界经济专业，博士

工作经历：

2010-2013 年，老挝央行证券管理委员会办公厅证券市场监管处，职员。

2014-2020 年，老挝央行证券管理委员会办公厅，培训与宣传处，处长。

2020 年至今，老—中证券有限公司，副总经理。



ທ່ານ ພິງສະຫວັດ ລືນາມ

ຊີວະປະຫວັດຫຍໍ້:

ວັນ ເດືອນ ປີເກີດ: 27 ກຸມພາ 1985

ສັນຊາດ: ລາວ

ຕຳແໜ່ງ: ຮອງຜູ້ອຳນວຍການ

ປະຫວັດການສຶກສາ:

ປີ 2005-2009: ປະລິນຍາຕີ ສາຂາໂທລະຄົມມະນາຄົມ ແລະ ສື່ສານ, ມະຫາວິທະຍາໄລ ໂທລະຄົມມະນາຄົມ, ນະຄອນຫຼວງປັກກິ່ງ ສປ ຈີນ

ປີ 2009-2012: ປະລິນຍາໂທ ສາຂາວິຊາການເງິນ ແລະ ບໍລິຫານທຸລະກິດ, ມະຫາວິທະຍາໄລ ໂທລະຄົມມະນາຄົມ, ນະຄອນຫຼວງປັກກິ່ງ ສປ ຈີນ

ປະຫວັດການເຮັດວຽກ:

ປີ 2012-2014: ນາຍໜ້າຊື້ ຂາຍ ຫຼັກຊັບ, ບໍລິສັດຫຼັກຊັບ ທຄຕລ-ກທ ຈຳກັດ

ປີ 2014-2023: ຫົວໜ້າພະແນກທີ່ປຶກສາດ້ານການເງິນ ແລະ ຄ້ຳປະກັນ ການອອກຈຳໜ່າຍຫຼັກຊັບ, ບໍລິສັດຫຼັກຊັບ ລາວ-ຈີນ ຈຳກັດ

ປີ 2022-2023: ຮອງຫົວໜ້າກອງເລຂາ ສະພາບໍລິຫານ, ບໍລິສັດຫຼັກຊັບ ລາວ-ຈີນ ຈຳກັດ

ປີ 2022-2023: ຜູ້ຊ່ວຍຜູ້ອຳນວຍການ, ບໍລິສັດຫຼັກຊັບ ລາວ-ຈີນ ຈຳກັດ

ປີ 2023-2024: ຜູ້ຊ່ວຍຜູ້ອຳນວຍການ, ທະນາຄານພັດທະນາລາວຈຳກັດ

ປີ 2024-ປະຈຸບັນ: ຮອງຜູ້ອຳນວຍການ, ບໍລິສັດຫຼັກຊັບ ລາວ-ຈີນ ມະຫາຊົນ



彭思晚

个人信息：

出生日期（日/月/年）：1985 年 2 月 27 日

国籍：老挝

职位：副总经理

教育背景：

2005-2009 年：北京邮电大学信息与通信工程学院通信工程专业，学士

2009-2012 年：北京邮电大学管理科学与工程信息与通信工程学院通信工程专业，硕士

工作经历：

2012-2014 年：BCEL-KT 证券有限公司经纪人

2014-2023 年：老-中证券有限公司投行部经理

2022-2023 年：老-中证券有限公司董事会秘书处副组长

2022-2023 年：老-中证券有限公司总经理助理

2023-2024 年：老挝开发银行总经理助理

2024 年至今：老-中证券公众公司副总经理

ບົດລາຍງານ ຜົນການດຳເນີນທຸລະກິດ ບລຈ ປະຈຳປີ 2025 ແລະ ແຜນການດຳເນີນທຸລະກິດ ບລຈ ປະຈຳປີ 2026

老-中证券 2025 年度工作报告暨 2026 年度经营计划

ປີ 2025 ເປັນປີທີ່ມີຄວາມໝາຍສຳຄັນໃນປະຫວັດການພັດທະນາຂອງ ບໍລິສັດຫຼັກຊັບ ລາວ-ຈີນ ມະຫາຊົນ (ຕໍ່ໄປເອີ້ນຫຍໍ້ວ່າ “ບລຈ”). ດ້ວຍຄວາມພະຍາຍາມຮ່ວມກັນຂອງພະນັກງານທຸກຄົນ ບລຈ ໄດ້ສຳເລັດການອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນຄັ້ງທຳອິດ (IPO) ແລະ ເຂົ້າຈົດທະບຽນໃນ ຕະຫຼາດຫຼັກຊັບລາວ (ຕລຊລ), ຊຶ່ງເປັນບາດກ້າວໃໝ່ອັນສຳຄັນໃນການພັດທະນາ ບລຈ. ພ້ອມກັນນັ້ນ, ບລຈ ຍັງໄດ້ຊຸກຍູ້ໂຄງການທີ່ປຶກສາທາງດ້ານການເງິນທີ່ສຳຄັນ ກໍຄື: ໂຄງການ IPO ຂອງ ທະນາຄານຮ່ວມພັດທະນາ ມະຫາຊົນ (JDB) ແລະ ໂຄງການອອກຈຳໜ່າຍຮຸ້ນໃຫ້ແກ່ຜູ້ຖືຮຸ້ນເດີມ ແລະ ການອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ ຂອງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ). ນອກຈາກນັ້ນ, ບລຈ ຍັງໄດ້ສືບຕໍ່ເຮັດວຽກງານເປັນທີ່ປຶກສາດ້ານການເງິນ ແລະ ຮ່ວມຄ້ຳປະກັນການອອກຈຳໜ່າຍພັນທະບັດລັດຖະບານ.

2025 年是老-中证券公众公司（以下简称 “公司”）具有里程碑意义的一年。在全体员工的共同努力下，公司成功完成了首次公开募股（IPO）并在老挝证券交易所（以下简称 “老交所”）上市，标志着公司发展迈入了新阶段。同时，公司顺利完成了联合开发银行（JDB）的 IPO 和外贸银行配股及公开发行等重点投行项目，继续做好国债财务顾问和代销工作。

ໃນເວລາທີ່ ບລຈ ສາມາດບັນລຸຜົນງານດີໄດ້, ກໍ່ໄດ້ຮັບການຍ້ອງຍໍສັນລະເສີນຈາກສຳນັກງານຄະນະກຳມະການຄຸ້ມຄ້ອງຫຼັກຊັບ (ສຄຄຊ) ແລະ ຕລຊລ. ໃນກອງປະຊຸມສະຫຼຸບຜົນງານ 15 ປີຂອງຕະຫຼາດທຶນລາວ ໃນວັນທີ 11 ພະຈິກ, ຊຶ່ງ ບລຈ ໄດ້ຮັບລາງວັນ “ຜົນການດຳເນີນງານ 15 ປີ ຂອງຕະຫຼາດທຶນລາວ” ຈາກປະທານ ຄຄຊ. ນອກນັ້ນ, ໃນງານມອບລາງວັນປະຈຳປີຂອງ ຕລຊລ ຄັ້ງວັນທີ 18 ທັນວາ, ບລຈ ໄດ້ຮັບໃບຍ້ອງຍໍຜົນງານລາງວັນ “ການເປີດເຜີຍຂໍ້ມູນປະຈຳປີ 2025” ແລະ ອີກ 3 ລາງວັນ ດັ່ງນີ້: “ລາງວັນທີ່ປຶກສາດ້ານການເງິນດີເດັ່ນ”, “ລາງວັນປັນຜົນດີເດັ່ນ” ແລະ “ລາງວັນບໍລິສັດລະດົມທຶນດີເດັ່ນ”.

在公司取得良好业绩的同时，也获得了证管委和老交所的荣誉认可：在 11 月 11 日举行的老挝资本市场 15 周年成果总结大会上，公司荣获证管委主席颁发的 “资本市场 15 周年运营成果奖状”。在 12 月 18 日的老交所年度颁奖典礼上，公司斩获 “2025 年度信息披露奖” 奖状，并荣获 “最佳财务顾问奖”、“最佳分红奖” 和 “最佳融资奖” 三座亚克力奖杯。

ດັ່ງນັ້ນ, ຈຶ່ງຂໍລາຍງານ ຜົນການດຳເນີນທຸລະກິດ ບລຈ ປະຈຳປີ 2025 ແລະ ແຜນການດຳເນີນທຸລະກິດ ບລຈ ປະຈຳປີ 2026 ດັ່ງລຸ່ມນີ້:

现将公司 2025 年度主要工作情况及 2026 年度经营计划汇报如下：

I. ການອອກຈຳໜ່າຍຮຸ້ນຄັ້ງທຳອິດຕໍ່ມວນຊົນ (IPO) ແລະ ເຂົ້າຈົດທະບຽນໃນ ຕລຊລ

首次公开募股（IPO）和在老交所上市工作

ອີງຕາມການມອບສິດຂອງ ມະຕິກອງສະພາບໍລິຫານ ບລຈ ສະໄໝວິສາມັນ ຄັ້ງທີ 2 ປະຈຳປີ 2024, ໃນວັນທີ 13 ມັງກອນ 2025, ບລຈ ໄດ້ຍື່ນສະເໜີ ຂໍອະນຸຍາດອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນຄັ້ງທຳອິດ ເຖິງ ສຄຄຊ ແລະ ໃນວັນທີ 17 ມີນາ ໄດ້ຮັບໃບອະນຸຍາດອອກຈຳໜ່າຍຮຸ້ນຄັ້ງທຳອິດຈາກ ສຄຄຊ. ວັນທີ 3 ເມສາ, ບລຈ ໄດ້ສຳເລັດການດຳເນີນການອອກຈຳໜ່າຍອອກຈຳໜ່າຍຮຸ້ນໃໝ່ລົງດ້ວຍດີ, ລວມຮຸ້ນທີ່ອອກຈຳໜ່າຍຈຳນວນ 111,111,200 ຮຸ້ນ, ມູນຄ່າກຳນົດ 100 ກີບ/ຮຸ້ນ, ລາຄາອອກຈຳໜ່າຍ 130 ກີບ/ຮຸ້ນ, ໄດ້ລະດົມທຶນລວມ 14,444,456,000 ກີບ. ໃນນັ້ນ ປະກອບມີ ເງິນສ່ວນເກີນມູນຄ່າຮຸ້ນຈຳນວນ 2,360,038,519 ກີບ ແລະ ເງິນເພີ່ມທຶນຈົດທະບຽນຈຳນວນ 11,111,120,000 ກີບ. ໃນວັນທີ 9 ເມສາ ໄດ້ຮັບໜັງສືແຈ້ງຕອບການຢັ້ງຢືນຜົນການອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນຂອງ ບລຈ ຈາກ ສຄຄຊ. ໃນວັນທີ 10 ເມສາ, ໄດ້ຍື່ນໃບສະເໜີຂໍຈົດທະບຽນຮຸ້ນ ທີ່ ຕລຊລ, ວັນທີ 22 ເມສາ ໄດ້ຮັບໃບອະນຸຍາດການຈົດທະບຽນຮຸ້ນຈາກ ຕລຊລ. ໃນວັນທີ 25 ເມສາ, ບລຈ ໄດ້ຈັດພິທີສະຫຼອງວັນຊື້ ຂາຍຮຸ້ນຄັ້ງທຳອິດ ແລະ ໄດ້ເຊັນສັນຍາຂຶ້ນທະບຽນຊື້ ຂາຍກັບ ຕລຊລ, ເປັນການເຂົ້າຈົດທະບຽນຢ່າງເປັນທາງການ.

根据老-中证券 2024 年第二次临时董事会会议决议授权，公司于 2025 年 1 月 13 日向证管委办公厅正式提交《首次公开发行股票申请》，3 月 17 日获得证管委办公厅颁发的《首次公开发行股票许可证》。4 月 3 日公司顺利完成新股发行工作，共计发行 111,111,200 股，面值 100 基普/股（约合 0.032 元/股），公开发行价格 130 基普/股（约合 0.042 元/股），募集资金 14,444,456,000 基普（约合 465.95 万元）。其中包括，股份溢价 2,360,038,519 基普（约合 76.13 万元），增加注册资本金 11,111,120,000 基普（约合 358.42 万元）。于 4 月 9 日获得证管委办公厅《关于确认老-中证券公众公司公开发行股票结果的批复》。4 月 10 日向老交所提交《股票登记申请》，于 4 月 22 日获得老交所《关于批准股票登记的批复》。4 月 25 日公司举行首个交易日庆典活动，与老交所签署上市协议，正式上市。

II. ວຽກງານທີ່ກ່ຽວຂ້ອງກັບກອງປະຊຸມຜູ້ຖືຮຸ້ນ ແລະ ສະພາບໍລິຫານ

董事会会议和股东会

ພາຍໃຕ້ການສະໜັບສະໜູນຢ່າງເຕັມທີ່ຈາກຜູ້ຖືຮຸ້ນ ແລະ ສະມາຊິກສະພາບໍລິຫານທຸກທ່ານ, ບລຈ ໄດ້ສຳເລັດການຈັດກອງປະຊຸມສະພາບໍລິຫານຈຳນວນ 4 ຄັ້ງ ແລະ ກອງປະຊຸມຜູ້ຖືຮຸ້ນ ປະຈຳປີ 2024, ພ້ອມທັງໄດ້ລາຍງານມະຕິກອງປະຊຸມຕໍ່ ສຄຄຊ ຢ່າງທັນເວລາ ແລະ ໄດ້ເຜີຍແຜ່ຂໍ້ມູນຕາມລະບຽບກຳນົດຜ່ານລະບົບເປີດເຜີຍຂໍ້ມູນຂອງ ຕລຊລ.

在全体股东和董事会成员的大力支持下，公司成功召开 4 次董事会会议和 2024 年度股东会，并将会议决议及时向证管委办公厅汇报并按规定在老交所网站进行了信息披露。

III. ສະພາບການດຳເນີນທຸລະກິດປະຈຳປີ
年度经营情况

ມາຮອດວັນທີ 31 ທັນວາ 2025, ບລຈ ມີຊັບສິນລວມປະມານ 237.56 ຕື້ກີບ, ຊັບສິນສຸດທິປະມານ 164.90 ຕື້ກີບ. ລາຍຮັບຈາກການດຳເນີນງານຕົວຈິງໃນໄລຍະການລາຍງານປະມານ 43.82 ຕື້ກີບ ແລະ ມີກຳໄລສຸດທິປະມານ 27.30 ຕື້ກີບ.

截至 2025 年 12 月 31 日，公司总资产 2,375.56 亿基普（约合 7,663.11 万元），净资产 1,649.01 亿基普（约合 5,319.41 万元）。报告期内实现营业收入 438.24 亿基普（约合 1,413.67 万元），净利润 273.03 亿基普（约合 880.75 万元）。

ຕາຕະລາງກຳໄລຂາດທຶນທີ່ກ່ຽວຂ້ອງກັບການປ່ຽນແປງລາຍການບັນຊີ

ລາຍການ	31 ທັນວາ 2024 (ກີບ)	31 ທັນວາ 2025 (ກີບ)	ສັດສ່ວນການປ່ຽນແປງ
ລາຍຮັບຈາກການດຳເນີນງານ	15,805,189,364	43,824,002,467	177.28%
ລາຍຈ່າຍຈາກການດຳເນີນງານ	4,484,391,136	16,520,610,359	268.40%
ກຳໄລກ່ອນອາກອນ	11,320,798,228	27,303,392,108	141.18%
ກຳໄລສຸດທິ	11,320,798,228	27,303,392,108	141.18%
ອັດຕາສ່ວນກຳໄລສຸດທິ	71.63%	62.30%	-13.02%
ROE	10.01%	18.82%	88.01%

利润表相关科目变动表

项　目	2024 年 12 月 31 日		2025 年 12 月 31 日		变动比例
	基普	合人民币万元	基普	合人民币万元	
营业收入	15,805,189,364	509.84	43,824,002,467	1,413.67	177.28%
营业支出	4,484,391,136	144.66	16,520,610,359	532.92	268.40%
利润总额	11,320,798,228	365.19	27,303,392,108	880.75	141.18%
净利润	11,320,798,228	365.19	27,303,392,108	880.75	141.18%
净利率		71.63%		62.30%	-13.02%
净资产收益率		10.01%		18.82%	88.01%

IV. ສະພາບພື້ນຖານຂອງບັນດາທຸລະກິດຫຼັກຂອງ ບລຈ ໃນປີ 2025 ມີດັ່ງນີ້:

2025 年公司各主营业务基本情况如下：

1. ວຽກງານ ທີ່ປຶກສາດ້ານການເງິນ ແລະ ຄ້ຳປະກັນການອອກຈຳໜ່າຍຫຼັກຊັບ

投行业务

ໃນປີ 2025, ວຽກງານ ທີ່ປຶກສາດ້ານການເງິນ ແລະ ຄ້ຳປະກັນການອອກຈຳໜ່າຍຫຼັກຊັບ ຂອງ ບລຈ ໄດ້ມີລາຍຮັບຈາກການດຳເນີນງານ ຈຳນວນ 22,419,612,630 ກີບ. ໃນນັ້ນແມ່ນມາຈາກການທີ່ ບລຈ ໃນຖານະເປັນທີ່ປຶກສາດ້ານການເງິນຫຼັກ ແລະ ຜູ້ຄ້ຳປະກັນການອອກຈຳໜ່າຍຫຼັກຊັບ ໄດ້ສຳເລັດໂຄງການ IPO ຂອງ JDB ແລະ ໂຄງການອອກຈຳໜ່າຍຮຸ້ນໃຫ້ແກ່ຜູ້ຖືຮຸ້ນເດີມ ແລະ ການອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ ຂອງ ທຄຕລ.

2025 年公司投行业务营业收入 22,419,612,630 基普（约合 723.21 万元）。公司作为主财务顾问和和主承销商，完成了联合开发银行（JDB）的 IPO 并在老交所上市项目以及外贸银行 IPO 配股并公开发行股票项目。

ໄດ້ລົງນາມໃນສັນຍາການບໍລິການທີ່ປຶກສາດ້ານການເງິນ ໃນການອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນຄັ້ງທຳອິດ (IPO) ກັບ ທະນາຄານ ບີໄອຊີ ລາວ ຈຳກັດ (BIC) ແລະ ບໍລິສັດ ຍອດງຶ່ມ ພາວເວີ ຈຳກັດ. ໄດ້ ຮ່ວມກັບ ບໍລິສັດຫຼັກຊັບ ທຄຕລ-ກທ ຈຳກັດ, ບໍລິສັດຫຼັກຊັບ ແອລ်ດີບີ ຈຳກັດຜູ້ດຽວ ແລະ ບໍລິສັດ LOCA ຈຳກັດ ໃນການລົງນາມສັນຍາການບໍລິການທີ່ປຶກສາດ້ານການເງິນ. ພ້ອມທັງໄດ້ລົງນາມໃນບັນທຶກຄວາມເຂົ້າໃຈວ່າດ້ວຍການຮ່ວມມືການບໍລິການທີ່ປຶກສາດ້ານການເງິນ ສຳລັບການອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນຄັ້ງທຳອິດ (IPO) ກັບ ທະນາຄານລາວ–ຈີນ.

分别与商业投资银行（BIC）、略乌电力有限公司签署首次公开募股（IPO）财务顾问协议。联合外贸-恭泰证券、老挝开发银行证券与 LOCA 有限公司签署绿色债发行财务顾问合同，与老-中银行签署首次公开募股（IPO）财务顾问合作备忘录。

2. ວຽກງານ ຄ້າຫຼັກຊັບ

自营业务

ໃນປີ 2025 ວຽກງານຄ້າຫຼັກຊັບມີກຳໄລຈາກການດັດແປງມູນຄ່າຍຸດຕິທຳ ຢູ່ທີ່ 12,922,927,650 ກີບ. ໃນນັ້ນ, ໄດ້ລວມກຳໄລມູນຄ່າຍຸຕິທຳ ຂອງການລົງທຶນຫຼັກຊັບໄລຍະສັ້ນ.

2025 年自营业务收益 12,922,927,650 基普（约合 416.87 万元）。其中，包括短期证券投资公允价值变动盈利 6,156,313,273 基普（约合 198.59 万元）。

3. ວຽກງານ ນາຍໜ້າຊື້ ຂາຍຫຼັກຊັບ
经纪业务

ໃນປີ 2025, ວຽກງານ ນາຍໜ້າຊື້ ຂາຍຫຼັກຊັບ ຂອງບໍລິສັດໄດ້ມີລາຍຮັບຕົວຈິງ 10,598,346,560 ກີບ. ໃນນັ້ນ, ລາຍຮັບວຽກງານ ນາຍໜ້າຊື້ ຂາຍຫຼັກຊັບ 102,262,352 ກີບ ແລະ ລາຍຮັບວຽກງານຕົວແທນຈຳໜ່າຍພັນທະບັດລັດຖະບານ 10,496,084,208 ກີບ.

2025 年公司实现经纪业务收入 10,598,346,560 基普（约合 341.88 万元）。其中，证券经纪业务收入 102,262,352 基普（约合 3.30 万元），国债代销业务收入 10,496,084,208 基普（约合 338.58 万元）。

4. ວຽກງານ ບໍລິຫານກອງທຶນ
私募基金管理业务

ພະນັກງານຂອງບໍລິສັດຈຳນວນ 5 ຄົນ ໄດ້ຜ່ານການສອບເສັງຮັບຮອງຄຸນສົມບັດຜູ້ປະກອບວິຊາຊີບກອງທຶນ ທີ່ຈັດໂດຍ ຕລຊລ.

ພ້ອມກັນນັ້ນ ບໍລິສັດໄດ້ເຄື່ອນໄຫວຢ່າງຕັ້ງໜ້າ ໃນການແລກປ່ຽນທາງດ້ານເຕັກນິກ ແລະ ປຶກສາຫາລືການຮ່ວມມືກັບພາກສ່ວນຕ່າງໆ ກ່ຽວກັບການຈັດຕັ້ງກອງທຶນສ່ວນບຸກຄົນ. ຢ່າງໃດກໍຕາມ ດ້ວຍການຕັດສິນໃຈຢ່າງຮອບຄອບ ຫຼັງຈາກໄດ້ດຳເນີນການສຶກສາຄົ້ນຄວ້າແລ້ວ ພົບວ່າ ລະບົບກອງທຶນຮ່ວມມີຄ່າໃຊ້ຈ່າຍໃນການພັດທະນາສູງ ຕ້ອງໃຊ້ການລົງທຶນໃນເບື້ອງຕົ້ນຫຼາຍ ແລະ ມີຄວາມສ່ຽງດ້ານການດຳເນີນງານສູງ. ເພື່ອຮັບປະກັນການດຳເນີນທຸລະກິດຢ່າງໝັ້ນຄົງ ບໍລິສັດຈຶ່ງສະເໜີໃນປະຈຸບັນຍັງບໍ່ຄວນສ້າງຕັ້ງບໍລິສັດບໍລິຫານກອງທຶນເປັນບໍລິສັດລູກ ເພື່ອຫຼີກລ່ຽງການຂະຫຍາຍທຸລະກິດກອງທຶນຮ່ວມໂດຍຂາດຄວາມຮອບຄອບ.

公司 5 名员工通过了老交所组织的基金从业人员资格考试。

积极与各方就设立私募基金进行技术交流和探讨合作。审慎决策：经过调研，发现公募基金系统开发费用高昂、前期投入及运营风险较大，为确保稳健经营，公司建议现阶段不设立投资基金管理子公司，避免盲目拓展公募基金业务。

V. ວຽກງານບຸກຄະລາກອນ
人力工作

ໄດ້ດຳເນີນການສົ່ງມອບວຽກລະຫວ່າງພະນັກງານຜູ້ເກົ່າ ແລະ ຜູ້ໃໝ່ ຂອງພະແນກບັນຊີ-ການເງິນ, ພະແນກການຄ້າຫຼັກຊັບ ແລະ ຜູ້ຮັບຜິດຊອບວຽກງານກອງເລຂານຸການ ສຳເລັດດ້ວຍດີ. ໄດ້ຈັດຕັ້ງໃຫ້ພະນັກງານທີ່ກ່ຽວຂ້ອງເຂົ້າຮ່ວມການຝຶກອົບຮົມດ້ານການເຜີຍແຜ່ຂໍ້ມູນຕາມມາດຕະຖານບັນຊີສາກົນ ແລະ ການຝຶກອົບຮົມຫົວຂໍ້ສະເພາະທີ່ກ່ຽວກັບລາຍງານການເງິນ. ໄດ້ປະສານງານກັບຄະນະກຳມະການບໍລິຫານເຂດພິເສດ ເພື່ອດຳເນີນການກວດກາສະຖານທີ່

ຫ້ອງການໃຫ້ສຳເລັດ. ພ້ອມທັງ ໄດ້ດຳເນີນການສຳພາດພະນັກງານ ແລະ ຈັດຝຶກງານຢ່າງເປັນລະບຽບ ເພື່ອເພີ່ມພະນັກງານໃໝ່ໃຫ້ແກ່ພະແນກທີ່ປຶກສາທາງດ້ານການເງິນ ແລະ ພະແນກບັນຊີ-ການເງິນ.

完成了财务部门、自营业务部门、秘书处负责人的新老交接工作。组织相关人员参加了国际会计通用准则信息披露培训及财务报告相关专题培训。配合特区管理委员会完成了劳工现场检查工作。有序开展了员工面试和实习工作，为投行及财务部门补充了新员工。

VI. ການພັດທະນາລະບົບຊື້ຂາຍຫຼັກຊັບຜ່ານໂທລະສັບມືຖື

手机证券交易系统开发

ບລຈ ໄດ້ຮ່ວມກັບ ບໍລິສັດ HITHINK INTERNATIONAL (SINGAPORE) PTE. LTD ແລະ ບໍລິສັດຫຼັກຊັບ ແອລ໌ດີບີ ລາຍງານຄວາມຄືບໜ້າການພັດທະນາລະບົບຊື້ ຂາຍຫຼັກຊັບຜ່ານໂທລະສັບມືຖື ຕໍ່ ສຄຄຊ ແລະ ຕລຊລ. ພ້ອມກັນນັ້ນ, ໄດ້ປຶກສາຫາລືຢ່າງລະອຽດກັບພາກສ່ວນທີ່ກ່ຽວຂ້ອງ ກ່ຽວກັບແຜນງານດ້ານເຕັກນິກ ແລະ ແຜນງານການເຊື່ອມຕໍ່ລະບົບໂອນເງິນລະຫວ່າງທະນາຄານກັບລະບົບຫຼັກຊັບ.

ບລຈ ໄດ້ປະສານງານກັບ ຕລຊລ ໃນການດຳເນີນການກວດກາຫ້ອງເຊີເວີ ແລະ ລະບົບເຕັກໂນໂລຊີຂໍ້ມູນ ໃຫ້ສຳເລັດ ພ້ອມທັງໄດ້ດຳເນີນການແປພາສາເມນູໃນລະບົບຝັ່ງຜູ້ໃຊ້ບໍລິການໃຫ້ສຳເລັດ. ນອກຈາກນັ້ນ ບລຈ ໄດ້ລົງນາມໃນສັນຍາເຊົ່າບໍລິການຄລາວກັບ ບໍລິສັດໂທລະຄົມມະນາຄົມລາວ, ສຳເລັດການຕິດຕັ້ງ ແລະ ນຳໃຊ້ລະບົບຝັ່ງເຊີເວີ ພ້ອມທັງໄດ້ດຳເນີນການຂໍເປີດບັນຊີນັກພັດທະນາແອັບພລິເຄຊັນ ໃນຮ້ານຄ້າແອັບພລິເຄຊັນຮຽບຮ້ອຍແລ້ວ. ພ້ອມກັນນັ້ນ ໄດ້ປຶກສາຫາລືກັບທີມງານ HITHINK ເພື່ອເພີ່ມຟັງຊັນການເປີດບັນຊີຫຼັກຊັບຜ່ານແບບຟອມອອນລາຍ.

与核新国际、老挝开发银行证券共同向证管委办公厅及老交所汇报了手机证券交易系统开发进展。与相关方就技术方案、银证转账接口方案进行了深入讨论。

配合老交所完成了机房及信息技术系统检查，并完成了客户端菜单翻译工作。与老挝电信签订了云服务租赁协议，完成了服务器端部署，并申请了应用商店开发者账号。与核新同花顺团队协商增加了证券账户线上表单开户功能。

VII. ການຮ່ວມມືກັບພາຍນອກ

对外合作

ການຮ່ວມມືກັບອົງການຄຸ້ມຄອງ ແລະ ຕະຫຼາດຫຼັກຊັບ:

与监管机构及交易所：

ໄດ້ຕິດຕາມຄະນະ ສຄຄຊ ເຂົ້າເຂົ້າຢ້ຽມຢາມ ຄະນະກຳມະການຄຸ້ມຄອງຫຼັກຊັບແຫ່ງ ສປ.ຈີນ ແລະ ໄດ້ຈັດການປະຊຸມຫາລື ແລະ ແລກປ່ຽນຄວາມຄິດເຫັນກັບພາກສ່ວນທີ່ກ່ຽວຂ້ອງ. ໃນໄລຍະດຽວກັນ, ໄດ້ເຂົ້າຢ້ຽມຢາມ ບໍລິສັດ ຫຼັກຊັບ ປາຊີຟິກ ຮຸ້ນສ່ວນ ຈຳກັດ ແລະ ໄດ້ຈັດການປະຊຸມຫາລືກັບຄະນະຜູ້ບໍລິຫານລະດັບສູງຂອງບໍລິສັດ.

ໄດ້ຕິດຕາມຄະນະ ຕລຊລ ເຂົ້າຢ້ຽມຢາມຕະຫຼາດຫຼັກຊັບເຊີນເຈີ້ນ ແລະ ໄດ້ເຂົ້າຮ່ວມພິທີຕໍ່ອາຍຸບັນທຶກຄວາມເຂົ້າໃຈ (MOU) ລະຫວ່າງຕະຫຼາດຫຼັກຊັບເຊີນເຈີ້ນ ແລະ ຕລຊລ.

ໄດ້ເຂົ້າຮ່ວມຢ່າງຕັ້ງໜ້າໃນງານຕ່າງໆ ເຊັ່ນ: ງານມະຫະກຳການເງິນລາວ, ກິດຈະກຳຄົບຮອບ 15 ປີ ຂອງຕະຫຼາດທຶນລາວ ແລະ ກອງປະຊຸມພົບປະລະຫວ່າງ ບໍລິສັດຈົດທະບຽນ ແລະ ຜູ້ລົງທຶນ.

ໄດ້ເຂົ້າຮ່ວມການໂຄສະນາເຜີຍແຜ່ວຽກງານຕະຫຼາດທຶນ, ໂດຍປະກອບມີການຈັດບັນຍາຍຫົວຂໍ້ຕ່າງໆ ເຊັ່ນ: “ຫຼັກການວິເຄາະມູນຄ່າຫຼັກຊັບ” ແລະ ກິດຈະກຳສົ່ງເສີມຕະຫຼາດທຶນລາວ.

ໄດ້ມີສ່ວນຮ່ວມໃນຫຼາຍວຽກງານຂອງ ສຄຄຊ ແລະ ຕລຊລ ເຊັ່ນ: ແຜນພັດທະນາຕະຫຼາດທຶນລາວ, ການປັບປຸງນິຕິກຳຕ່າງໆ ແລະ ການສຳຫຼວດແບບສອບຖາມຈາກຜູ້ລົງທຶນ.

陪同证管委办公厅访问中国证监会，并与证监会相关部门进行了座谈交流。期间，访问太平证券股份有限公司，与公司高管进行了座谈。

陪同老交所访问深交所，并参与了深交所与老交所的谅解备忘录续签仪式。

积极参加了老挝金融博览会、资本市场 15 周年系列活动、上市公司与投资者见面会等。

配合开展了资本市场宣传工作，包括《证券价值分析原则》讲座及走进老挝资本市场宣传活动。

参与了多项与证管委办公厅、老交所相关的资本市场发展规划、信息披露通知修订、机构投资者问卷调查等工作。

ການຮ່ວມມືກັບບໍລິສັດຫຼັກຊັບອື່ນໆ:

与其他证券公司合作：

ໄດ້ເຂົ້າຮ່ວມກັບ 3 ບໍລິສັດຫຼັກຊັບ ຄື: ບໍລິສັດຫຼັກຊັບ ທຄຕລ-ກທ ຈຳກັດ, ບໍລິສັດຫຼັກຊັບ ແອລ໌ດີບີ ຈຳກັດຜູ້ດຽວ ແລະ ບໍລິສັດ ຫຼັກຊັບເອພີເອັມລາວ ຈຳກັດ ເຊັນບົດບັນທຶກຄວາມເຂົ້າໃຈວ່າດ້ວຍການເພີ່ມທະວີການຮ່ວມມື ກັບ ກະຊວງການເງິນ ເພື່ອຮ່ວມກັນຊຸກຍູ້ການປະຕິຮູບລັດວິສາຫະກິດ ແລະ ເຂົ້າຈົດທະບຽນໃນ ຕລຊລ. ໄດ້ເຂົ້າຮ່ວມການຫາລືຂອງຄະນະກຳມະການປະຕິຮູບລັດວິສາຫະກິດ ກ່ຽວກັບການປັບປຸງໜ້າທີ່ພາຍຫຼັງການປະຕິຮູບໂຄງສ້າງອົງການຂອງລັດ ແລະ ມີແຜນການຈະລົງນາມບັນທຶກຄວາມເຂົ້າໃຈໃໝ່ຮ່ວມກັບບັນດາ ບໍລິສັດຫຼັກຊັບ.

与外贸银行-恭泰证券、联合开发银行证券和 APMLAO 三家证券公司共同与老挝财政部联合签署合作备忘录，共同推动国企改革及上市。参与了国企改革委员会关于政府机构改革后职能调整的讨论，并拟与各证券公司重新签署合作备忘录。

ແຜນການດຳເນີນທຸລະກິດ ປະຈຳປີ 2026

2026 年度经营计划

ບລຈ ມີແຜນການດຳເນີນທຸລະກິດ ປະຈຳປີ 2026 ໂດຍເນັ້ນໃສ່ບາງວຽກງານດັ່ງລຸ່ມນີ້:

展望 2026 年，公司将重点聚焦以下几个方面的工作：

1. **ວຽກງານການບໍລິຫານ ແລະ ການຈ່າຍເງິນປັນຜົນ**

   公司治理与分红

ມີແຜນການຈັດກອງປະຊຸມສະພາບໍລິຫານ ແລະ ກອງປະຊຸມຜູ້ຖືຮຸ້ນ ປະຈຳປີ 2025 ໃນເດືອນ ເມສາ 2026, ເພື່ອພິຈາລະນາຮອງຮັບ ແລະ ກຳນົດແຜນການຈ່າຍເງິນປັນຜົນປະຈຳປີ ແລະ ດຳເນີນການຈ່າຍເງິນປັນຜົນໃຫ້ສຳເລັດ.

计划于 2026 年 4 月召开 董事会会议和 2025 年度股东会，审议并确定年度分红方案，完成分红工作。

2. **ແຜນການນຳໃຊ້ເງິນທຶນທີ່ລະດົມໄດ້**

   募集资金使用规划

ຈະຈັດປະຊຸມສະພາບໍລິຫານ ແລະ ກອງປະຊຸມຜູ້ຖືຮຸ້ນ ວິສາມັນ ໃນເວລາທີ່ເໝາະສົມ ເພື່ອພິຈາລະນາວ່າ ເງິນທຶນທີ່ລະດົມໄດ້ຈາກການອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນຄັ້ງທຳອິດ ຈະຖືກນຳໄປໃຊ້ຕາມແຜນການໃນການຈັດຕັ້ງ ບໍລິສັດບໍລິຫານກອງທຶນ ຫຼື ຈະມີການປ່ຽນແປງຈຸດປະສົງການນຳໃຊ້ເງິນທຶນເພື່ອເສີມສ້າງສະພາບຄ່ອງຂອງບໍລິສັດ.

适时召开董事会会议和临时股东会，审议首次公开募股（IPO）募集资金是否按计划设立投资基金管理公司，或变更募集资金用途以补充公司流动性。

3. **ການນຳລະບົບຊື້ຂາຍຫຼັກຊັບຜ່ານໂທລະສັບມືຖືເຂົ້ານຳໃຊ້**

   手机证券交易系统上线

ຈະພະຍາຍາມດຳເນີນການພັດທະນາ ແລະ ທົດສອບລະບົບຊື້ ຂາຍຫຼັກຊັບຜ່ານໂທລະສັບມືຖືໃຫ້ສຳເລັດໂດຍໄວ ເພື່ອໃຫ້ໄດ້ນຳໃຊ້ງານໂດຍໄວ ເພື່ອຍົກສູງການບໍລິການລູກຄ້າໃຫ້ດີຍິ່ງຂຶ້ນ.

力争尽快完成手机证券交易系统的开发和测试工作，争取早日投入使用，提升客户服务体验。

4. **ການຄົ້ນຄວ້ານະວັດຕະກຳດ້ານທຸລະກິດ ແລະ ຜະລິດຕະພັນ**

   业务与产品创新探索

ອີງຕາມການສະເໜີຂອງ ຕລຊລ, ບລຈ ຈະຮ່ວມຄົ້ນຄວ້າຄວາມເປັນໄປໄດ້ໃນການສຶກສາຄວາມເປັນໄປໄດ້ສຳລັບການອອກຈຳໜ່າຍຜະລິດຕະພັນໃບຢັ້ງຢືນການຝາກຮັບຫຼັກຊັບ, ໂດຍສຳຫຼວດຄວາມເປັນໄປໄດ້ໃນການນຳໃຊ້ ETF ຄຳຂອງຕະຫຼາດຫຼັກຊັບຮົງກົງ ຫຼື ETF50 ຂອງຕະຫຼາດຫຼັກຊັບຈີນແຜ່ນດິນໃຫຍ່ A-share ເປັນຊັບສິນອ້າງອີງ, ເພື່ອອອກຈຳໜ່າຍໃນ ຕລຊລ ແລະ ພິຈາລະນາຄວາມເປັນໄປໄດ້ໃນການດຳເນີນທຸລະກິດຜູ້ສ້າງສະພາບຄ່ອງ (Market Maker).

根据老交所要求，牵头准备发行存托凭证产品的可行性研究方案，探索以港交所黄金 ETF 或 A 股创业板 ETF50 为底层资产，在老交所发行存托凭证产品和开展做市商业务的可行性。

5. ເສີມສ້າງຄວາມເຂັ້ມແຂງການບໍລິການທີ່ປຶກສາດ້ານການເງິນ ແລະ ການຊຸກຍູ້ໂຄງການ

投行业务强化与项目推进

ອີງຕາມການເຕີບໂຕຂອງວຽກງານທີ່ປຶກສາດ້ານການເງິນ ບລຈ ຈະຈັດສັນເພີ່ມຈຳນວນພະນັກງານໃຫ້ມີຄວາມເໝາະສົມ. ໂດຍເນັ້ນໃສ່ການຮັບປະກັນການດຳເນີນວຽກງານທີ່ປຶກສາທາງດ້ານການເງິນສຳລັບໂຄງການ IPO ຂອງທະນາຄານ ເພື່ອການລົງທຶນ ແລະ ການຄ້າ (BIC), ບໍລິສັດ ຍອດງຶ່ມ ພາວເວີ ຈຳກັດ, ລວມທັງໂຄງການອອກພັນທະບັດສີຂຽວຂອງບໍລິສັດ LOCA, ໂດຍຮັບໜ້າທີ່ເປັນທີ່ປຶກສາຮ່ວມ ແລະ ຕົວແທນຈຳໜ່າຍ. ພ້ອມກັນນັ້ນ, ຈະສືບຕໍ່ຕິດຕາມ ໂຄງການທີ່ປຶກສາທາງດ້ານການເງິນສຳລັບໂຄງການ IPO ຂອງທະນາຄານລາວ–ຈີນ. ນອກຈາກນັ້ນ, ຈະຊຸກຍູ້ການດຳເນີນການຕາມສັນຍາໂອນຮຸ້ນຂອງ ກຸ່ມບໍລິສັດວັດທະນະທຳ–ທ່ອງທ່ຽວລາວ ມະຫາຊົນ ເພື່ອໃຫ້ສາມາດຮັບເງິນຄ່າໂອນຮຸ້ນ ແລະ ດຳເນີນການໂອນຮຸ້ນໃຫ້ສຳເລັດພາຍໃນໄຕມາດ 2 ປີ 2026.

根据投行业务增长情况，合理增加投行业务人员配置。重点保障商业和投资银行（BIC）、略乌电力有限公司 IPO 财务顾问业务，以及 LOCA 网约车公司绿色债发行联合财务顾问和代销工作。继续跟进老-中银行 IPO 财务顾问项目。推动老挝文旅集团股权转让协议落实，争取在 2026 年 2 季度完成股权转让资金的实收和转股工作。

ປີ2025 ເປັນປີທີ່ມີຄວາມສຳຄັນຢ່າງຍິ່ງໃນປະຫວັດການພັດທະນາຂອງບໍລິສັດ. ການເຂົ້າຈົດທະບຽນໃນຕະຫຼາດຫຼັກຊັບໄດ້ເພີ່ມກຳລັງໃໝ່ໃນການຂັບເຄື່ອນ ແລະ ໂອກາດໃນການພັດທະນາໃຫ້ແກ່ບໍລິສັດ. ໃນປີ 2026 ບໍລິສັດຍັງຄົງຍຶດຫຼັກການການບໍລິຫານຢ່າງຮອບຄອບ ແລະ ການພັດທະນາດ້ວຍນະວັດຕະກຳໃໝ່, ເນັ້ນໃສ່ທຸລະກິດຫຼັກ, ເສີມສ້າງລະບົບຄວບຄຸມພາຍໃນ, ຂະຫຍາຍການຮ່ວມມື ແລະ ສູ້ຊົນສ້າງມູນຄ່າສູງສຸດໃຫ້ແກ່ບໍລິສັດ ເພື່ອສ້າງຜົນຕອບແທນທີ່ດີຍິ່ງໃຫ້ແກ່ຜູ້ຖືຮຸ້ນ.

2025 年是公司发展史上浓墨重彩的一笔。上市为公司注入了新的活力和发展机遇。展望 2026 年，我们将继续秉持稳健经营、创新发展的理念，聚焦主业，强化内控，深化合作，努力实现公司价值的最大化，为股东创造更丰厚的回报。

ໝາຍເຫດ: ອັດຕາແລກປ່ຽນແມ່ນອີງຕາມ ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ ໃນວັນທີ 31 ທັນວາ 2025

1 ຢວນເທົ່າກັບ 3,100.00 ກີບ, 1 ໂດລາສະຫາລັດເທົ່າກັບ 21,709.00 ກີບ.

注：本文汇率根据老挝外贸银行 2025 年 12 月 31 日外汇牌价 1 元=3,100.00 基普，1 美元=21,709.00 基普。

ຜູ້ອຳນວຍການ

总经理

